ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

16-23 ເມສາ 2026

ປີທີ 15 ສະບັບທີ 1062

ລາຍສັປະດາ

## ຄະນະຜູ້ແທນສະພາແຫ່ງຊາດ ສຳເລັດການເຂົ້າຮ່ວມກອງປະຊຸມໃຫຍ່ IPU ຄັ້ງທີ 152



(ສພຊ) - ໃນລະຫວ່າງວັນທີ 15-19 ເມສາ 2026 ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ເຂົ້າຮ່ວມກອງປະຊຸມໃຫຍ່ສະຫະພັນລັດຖະສະພາສາກົນ (Inter-Parliamentary Union - IPU) ຄັ້ງທີ 152 ທີ່ນະຄອນອິສຕັນບູນ, ປະເທດຕວັກກີ ເຊິ່ງມີຄະນະຜູ້ແທນຈາກ 126

ອ່ານຕໍ່ໜ້າ 4

## ຫາລືການຈັດລຽງບຸລິມະສິດຮ່າງກົດໝາຍທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມ ສພຊ



(ສພຊ) - ວັນຈັນທີ 20 ເມສານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມປຶກສາຫາລືກ່ຽວກັບການຈັດລຽງບຸລິມະສິດກົດໝາຍທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ແລະ ສະໄໝສາມັນປະຈຳປີ ຂອງສະພາແຫ່ງຊາດ ຊຸດທີ X ໂດຍການເປັນປະທານຂອງທ່ານ ກອງແກ້ວ ໄຊສົງຄາມ ຮອງປະທານສະພາແຫ່ງຊາດ ເຊິ່ງມີບັນດາທ່ານປະທານ-ຮອງປະທານກຳມາທິການ, ຮອງລັດຖະມົນຕີ, ຮອງຫົວໜ້າອົງການ, ຫົວໜ້າ-ຮອງຫົວໜ້າກົມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຫຼາຍກວ່າ 100 ທ່ານ.

ທ່ານ ກອງແກ້ວ ໄຊສົງຄາມ ກ່າວວ່າ: ກອງປະຊຸມຄັ້ງນີ້ ມີຈຸດປະສົງເພື່ອຮັບປະກັນໃຫ້ບັນດາຮ່າງກົດໝາຍທີ່ໄດ້ກຳ

ອ່ານຕໍ່ໜ້າ 6



ແນວຄິດປະທານ

### ໄກສອນ ພົມວິຫານ

ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ການສ້າງ ແລະ ບູລະນະລະບົບກົດໝາຍເທື່ອລະກ້າວນັ້ນ ຕ້ອງເຮັດຢ່າງມີຈຸດສຸມ, ແທດຕົວຈິງ, ການເລືອກເຟັ້ນໂດຍຕິດພັນກັບໜ້າທີ່ເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງຄວາມສະຫງົບ ໃນແຕ່ລະໄລຍະ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 203)

ລະບົບກົດໝາຍ ຕ້ອງໄດ້ຮັບການປັບປຸງບູລະນະ ແລະ ຕ້ອງໄດ້ຮັບການເຄົາລົບຢູ່ສະເໝີ, ອັນນັ້ນເປັນປັດໄຈທີ່ມີຄວາມສຳຄັນທີ່ສຸດ ໃນການເພີ່ມທະວີຄວາມເຂັ້ມແຂງຂອງລັດພວກເຮົາ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 202)

ບໍ່ມີກົດໝາຍ ຫຼື ປະຕິບັດກົດໝາຍບໍ່ເຄັ່ງຄັດ ເປັນສາເຫດພາໃຫ້ມີການຕ້ອງໂທດ, ເປັນບໍ່ເກີດແຫ່ງຄວາມອະທຳ, ລ່ວງອຳນາດແລະ ຈະນຳໄປເຖິງບ່ອນມ້າງເພຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 202)

ອ່ານຕໍ່ສະບັບໜ້າ

## ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງ ສພຂ ຫຼວງພະບາງ




ອ່ານຕໍ່ໜ້າ 5

## ເລຂາທິການໃຫຍ່ອົງການ AAWC ເດີນທາງມາເຮັດວຽກກັບສະພາແຫ່ງຊາດ



(ສພຊ) - ວັນທີ 23 ເມສາຜ່ານມາ, ທ່ານ ເພັດລາ ທັນທະວົງສາ ຮອງປະທານກຳມາທິການການຕ່າງປະເທດ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງທ່ານ ຊຶງ-ແຈ ຮາ (Seung-Jae Ha) ເລຂາທິການໃຫຍ່ອົງການສະພາທີ່ປຶກສາກ່ຽວກັບບັນຫານ້ຳຂອງລັດຖະສະພາອາຊີ (Asia National Assembly Water Consultative Board - AAWC) ພ້ອມດ້ວຍຄະນະໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ເພື່ອປຶກສາຫາລືກ່ຽວກັບການກະກຽມຄວາມພ້ອມໃນການເປັນເຈົ້າພາບຈັດກອງປະຊຸມສະພາທີ່ປຶກສາກ່ຽວກັບບັນຫານ້ຳຂອງລັດຖະສະພາອາຊີ ຄັ້ງທີ 9 (The 9th AAWC Board Meeting) ແລະ ກອງປະຊຸມໂຕະມົນກ່ຽວກັບບັນຫາອາກາດ ແລະ ນ້ຳ ຄັ້ງທີ 3 (The 3rd Climate and Water Roundtable) ເຊິ່ງຈະຈັດຂຶ້ນໃນລະຫວ່າງວັນທີ 28-30 ກໍ

ອ່ານຕໍ່ໜ້າ 4

## ກອງປະຊຸມປະຈຳປີຂອງເຈົ້າໜ້າທີ່ງົບປະມານລັດຖະສະພາອາຊີ ຄັ້ງທີ 4



ອ່ານຕໍ່ໜ້າ 3

ການປັບຕົວເຂົ້າກັບລັດທິທຶນນິຍົມ

(ໜ້າ 6)



ສະພາ Turkey ...

(ໜ້າ 8)

ເຝົ້າໄວ້ ໄດ້ຍິນຮຽນ

ວິເສດ ສະແຫວງສຶກສາ

ທູບົບເຣື່ອງຍ...

(ໜ້າ 12)

# ກອງປະຊຸມຄັ້ງປະຖົມມະລຶກຂອງ ສພຂ ໄຊຍະບູລີ




(ສພຂ) - ພາຍຫຼັງດຳເນີນມາເປັນເວລາ 2 ວັນ, ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ຊຸດທີ V ໄດ້ປິດລົງດ້ວຍຜົນສຳເລັດອັນຈົບງາມ ໃນວັນທີ 10 ເມສາທີ່ຜ່ານມາ ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ ກຳມະການສູນກາງພັກເລຂາພັກແຂວງປະທານສະພາປະຊາຊົນແຂວງໄຊຍະບູລີ, ມີບັນດາກຳມະການປະຈຳພັກແຂວງ, ກຳມະການພັກແຂວງ, ອາດີດການນຳຂອງແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7, ສະມາຊິກສະພາປະຊາຊົນແຂວງ ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ພາກທຸລະກິດ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ; ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຕ່າງໆ ຂອງແຂວງ ດັ່ງນີ້:

1. ຮັບຟັງບົດລາຍງານຜົນສຳເລັດການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະສະມາຊິກສະພາປະຊາຊົນແຂວງຊຸດທີV;

2. ເລືອກຕັ້ງຕຳແໜ່ງສຳຄັນຕ່າງໆຂອງອົງການອຳນາດລັດຂັ້ນທ້ອງຖິ່ນ ແລະ ຮັບຮອງເອົາກົງຈັກການຈັດຕັ້ງຂອງສະພາປະຊາຊົນແຂວງດັ່ງນີ້:

- ທ່ານ ເພັງນິລັນ ຄຳພັນເພັງ ເປັນປະທານສະພາປະຊາຊົນແຂວງ;

-ຮອງປະທານສະພາປະຊາຊົນແຂວງ ຈຳນວນ 2 ທ່ານ: ທ່ານ ດຣ. ນາງ ໄກຍະສອນ ສີດາ ແລະ ທ່ານ ກາວີ ເກດດີມລີ;

ກຳມະການຄະນະປະຈຳສະພາປະຊາຊົນແຂວງ ຈຳນວນ 4 ທ່ານ:

+ ທ່ານ ເສັງວິໄລ ສິງ ເປັນຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ

+ ທ່ານ ປອ. ແວວເພັດ ສີບຸນມາ ເປັນປະທານຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ

+ ທ່ານ ກາວີ ເກດດີມລີ ເປັນປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍຸຕິທຳ;

+ ທ່ານ ນາງ ວັນນາ ພົມມະສອນ ປະທານຄະນະກຳມະການວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ;

ຮອງປະທານຄະນະກຳມະການແລະຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ:

+ ຮອງປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແລະຍຸຕິທຳ ຈຳນວນ 2 ທ່ານ: ທ່ານ ພັທບຸນມາ ວາລະສິງ ແລະ ທ່ານ ສົມນຶກ ສີສະຫວັນ;

+ ຮອງປະທານກຳມາທິການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ ຈຳນວນ 2 ທ່ານ:ທ່ານ ສົມຊາຍ ແກ້ວບົວ ແລະ ທ່ານ ນາງສັງຄີ ພົງພັນ;

+ ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ ຈຳນວນ 2 ທ່ານ: ທ່ານ ນາງ ບົວຄຳ ສີສະວົງ ແລະ ທ່ານວິໄລເດດ ພົມມະເທບ;

+ ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ຈຳນວນ 2 ທ່ານ: ທ່ານ ຄຳປະດິດ ລິນທະວົງ ແລະ ທ່ານ ນາງ ສົມຈິດ ແສງສີວົງ;

3. ຮັບຟັງບົດລາຍງານກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຂອງແຂວງ 5 ປີ (2026-2030), ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດສອບປະຈຳພາກເໜືອ,

4. ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດກາລັດແຂວງ, ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສານປະຊາຊົນແຂວງ;

5. ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການໄອຍະການປະຊາຊົນແຂວງ,ຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສະພາປະຊາຊົນແຂວງ,

6. ບົດລາຍງານ ແຜນການສ້າງແລະປັບປຸງນິຕິກຳໃຕ້ກົດໝາຍ 5 ປີ ແຕ່ປີ (2026-2030) ຂອງສະພາປະຊາຊົນແຂວງ ຊຸດທີ V,

7. ຄົ້ນຄວ້າ, ພິຈາລະນາ ແລະຮັບຮອງເອົາຮ່າງມະຕິຂອງກອງປະຊຸມ ຈຳນວນ 7 ມະຕິ ຄື: ຮ່າງ ມະຕິ ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ 5 ປີ (2026-2030),

8. ຮັບຮອງເອົາ ແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດສອບປະຈຳພາກເໜືອ,

9. ຮັບຮອງເອົາ ແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດກາລັດແຂວງ,

10. ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສານປະຊາຊົນແຂວງ,

11. ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການໄອຍະການປະຊາຊົນແຂວງ,

12. ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສະພາປະຊາຊົນແຂວງ,

13. ຮັບຮອງເອົາ ແຜນການສ້າງແລະປັບປຸງນິຕິກຳໃຕ້ກົດໝາຍ 5 ປີ ແຕ່ປີ (2026-2030) ຂອງສະພາປະຊາຊົນແຂວງ ຊຸດທີ V.

ກອງປະຊຸມຍັງໄດ້ຮັບຟັງການລາຍງານ, ອະທິບາຍ, ຊີ້ແຈງຈາກທ່ານປະທານຄະນະກຳມະການປົກຄອງແຂວງ, ອົງການກວດກາລັດແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງແລະພາກສ່ວນທີ່ກ່ຽວຂ້ອງຫ ໃນໄລຍະດຳເນີນກອງປະຊຸມ ໄດ້ມີປະຊາຊົນສົ່ງຄຳຄິດຄຳເຫັນຜ່ານໂທລະສັບ ສາຍດ່ວນ ລວມທັງໝົດ 6 ສາຍ ຕໍ່ຄຳຄິດຄຳເຫັນຂອງປະຊາຊົນ ເຊິ່ງໄດ້ລາຍງານໃຫ້ອົງການປົກຄອງແຂວງ ເພື່ອຄົ້ນຄວ້າພິຈາລະນາແກ້ໄຂ.




# ເຊື່ອມຊຶມ ແລະ ຜັນຂະຫຍາຍເອກະສານສຳຄັນຂອງພັກ ແລະ ປາຖະກະຖາວັນສຳຄັນຕ່າງໆ

(ສພຂ) - ວັນທີ 6 ເມສານີ້ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ, ໄດ້ມີກອງປະຊຸມເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ແລະ ປະຖະກະຖາວັນສຳຄັນຕ່າງໆ ໃນເດືອນເມສາ 2026 ໂດຍການເປັນປະທານຮ່ວມຂອງທ່ານ ຄຳຜັນ ຄູນສະຫວັນ ຮອງປະທານສະພາປະຊາຊົນແຂວງ, ທ່ານ ນາງ ພູທອນ ແກ້ວພູວົງ ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ທອງໃສ ອິນທິແສງ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ; ເຂົ້າຮ່ວມມີບັນດາທ່ານຮອງປະທານຄະນະກຳມະການ, ຫົວໜ້າ ແລະ ຮອງຫົວໜ້າຂະແໜງ ພະນັກງານວິຊາການພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.




ໃນພິທີໄດ້ຮັບຟັງການເຜີຍແຜ່ເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ໂດຍໄດ້ເນັ້ນໃສ່ການສ້າງພັກໃຫ້ບໍລິສຸດແຂງແຮງ, ການພັດທະນາເສດຖະກິດ-ສັງຄົມ, ການຍົກລະດັບຄຸນນະພາບຊີວິດປະຊາຊົນ ແລະ ການປົກປ້ອງປະເທດຊາດ ໃນໄລຍະໃໝ່; ພ້ອມນັ້ນ, ຍັງໄດ້ປາຖະກະຖາວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບ ຄົບຮອບ 65 ປີ (05 ເມສາ 1961-05 ເມສາ 2026) ຕື່ມ.

ພ້ອມນັ້ນ, ວັນທີ 9 ເມສາ, ທີ່ ສພຂ ສະຫວັນນະເຂດ ໄດ້ມີພິທີມອບ-ຮັບຄອມພິວເຕີ້ຕັ້ງໂຕະ ໃຫ້ແກ່ຫ້ອງການສຶກສາທິການ ແລະ ກິລາ ເມືອງໄຊພູທອງ ມູນຄ່າ 15 ລ້ານກວ່າກີບ ຕາງໜ້າກ່າວມອບໂດຍທ່ານ ຄຳຜັນ ຄູນສະຫວັນ ຮອງປະທານສະພາປະຊາຊົນແຂວງ ແລະ ຕາງໜ້າກ່າວຮັບໂດຍທ່ານ ນາງ ພູເງິນ ເທບພະນິນໄຊ ຮອງປະທານຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງໄຊພູທອງພ້ອມດ້ວຍຄະນະນຳຫ້ອງການສຶກສາທິການ ແລະ ກິລາເມືອງ ເຂົ້າຮ່ວມເປັນສັກຂີພິຍານ.



# ມອບ-ຮັບໜ້າທີ່ພາຍໃນ ສພຂ ບໍລິຄຳໄຊ




(ສພຂ) - ວັນທີ 8 ເມສາຜ່ານມາ, ໄດ້ມີພິທີມອບ-ຮັບໜ້າທີ່ຂອງຄະນະປະຈຳສະພາປະຊາຊົນແຂວງບໍລິຄຳໄຊ ລະຫວ່າງທ່ານ ນາງ ຟອງສະໝຸດ ພົງວິຈິດ ກຳມະການພັກແຂວງ, ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ (ຜູ້ເກົ່າ) ກັບ ທ່ານ ນາງ ຂັນທອງ ພັນທະຈັກ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ (ຜູ້ໃໝ່); ທ່ານ ນາງ ມາລີສາ ອາໄພລາດ ປະທານຄະນະກຳມະການຍຸຕິທຳປ້ອງກັນຊາດປ້ອງກັນຄວາມສະຫງົບ (ຜູ້ເກົ່າ) ກັບ ທ່ານ ໄຊຍະສຸກ ຫຼຽນຕະກຸນ ປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍຸຕິທຳ (ຜູ້ໃໝ່); ທ່ານ ສີສະຫວາດ ທັນທະບຸນ ປະທານຄະນະກຳມະການເສດຖະກິດແຜນການ ແລະ ການເງິນ (ຜູ້ເກົ່າ) ກັບ ທ່ານ ຄຳປຸ່ນ ສີຫາລາດ ປະທານຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ (ຜູ້ໃໝ່); ທ່ານ ນາງ ຂັນທອງ ພັນທະຈັກ ປະທານກຳມາທິການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ຜູ້ເກົ່າ) ກັບ ທ່ານ ນາງ ພິດສະໄໝ ແກ້ວວິເສດ ປະທານກຳມາທິການວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ (ຜູ້ໃໝ່); ມີທ່ານ ໄຊອຳພອນ ສີຫາວົງ, ກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ; ຄະນະປະຈຳສະພາປະຊາຊົນແຂວງ ຊຸດທີ IV ແລະ ຊຸດທີ V, ຮອງປະທານກຳມະການ ແລະ ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ຊຸດທີ IX ແລະ ຊຸດທີ X, ຫົວໜ້າຂະແໜງຮອງ, ຫົວໜ້າຂະແໜງ ຕະຫຼອດຮອດພະນັກງານວິຊາການພາຍໃນສະພາປະຊາຊົນແຂວງ ແລະ ແຂກຖືກເຊີນພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ໃນພິທີ, ໄດ້ຮັບຟັງການຜ່ານມະຕິກອງປະຊຸມຄັ້ງປະຖົມມະລືກຂອງສະພາປະຊາຊົນແຂວງບໍລິຄຳໄຊ ສະບັບເລກທີ 03/ສພຂ.ບຊ, ລົງວັນທີ 02 ເມສາ 2026 ວ່າດ້ວຍການຮັບຮອງເອົາໂຄງປະກອບກົງຈັກການຈັດຕັ້ງ, ປະທານຄະນະກຳມະການ ແລະ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ພ້ອມທັງຮັບຟັງການລາຍງານຫຍໍ້ກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງບັນດາກຳມະການ ແລະ ຫ້ອງວ່າການສະພາປະຊາຊົນແຂວງ ໃນໄລຍະ 5 ປີຜ່ານມາ ແລະ ແຜນການໃນຕໍ່ໜ້າ. ຫຼັງຈາກນັ້ນ, ກໍໄດ້ມີການລົງລາຍເຊັນໃສ່ບົດບັນທຶກມອບ-ຮັບໜ້າທີ່ລະຫວ່າງຜູ້ເກົ່າ ແລະ ຜູ້ໃໝ່.

ທ່ານ ໄຊອຳພອນ ສີຫາວົງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານກໍຄືຜົນສຳເລັດທີ່ການນຳຂອງກຳມະການ ຍາດມາໄດ້ ທັງເນັ້ນໜັກເຊີດຊູຄວາມເປັນເຈົ້າການ ແລະ ຮັບຜິດຊອບສູງໃນການຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການ ໂດຍສະເພາະການບູລະນະປັບປຸງກົງຈັກການຈັດຕັ້ງ ບົນພື້ນຖານຫຼັກໝັ້ນການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ຄວາມຮູ້ຄວາມສາມາດ ຂອງພະນັກງານພາຍໃນສະພາປະຊາຊົນແຂວງ; ສືບຕໍ່ປັບປຸງແບບແຜນວິທີເຮັດວຽກ, ກົນໄກການບໍລິຫານ, ການປະສານງານ, ການຄຸ້ມຄອງວຽກງານໃຫ້ມີຄວາມສອດຄ່ອງ, ກະທັດຫັດ, ວ່ອງໄວ, ໄຫວພິບ ແລະ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ໃຫ້ໄດ້ຮັບຜົນດີຍິ່ງຂຶ້ນ; ເປັນເຈົ້າການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ, ມະຕິຄຳສັ່ງ, ກົດລະບຽບຂອງພັກ-ກົດໝາຍຂອງລັດ, ມະຕິກອງປະຊຸມສະພາປະຊາຊົນແຂວງ, ມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ, ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການຂອງຂັ້ນເທິງວາງອອກ ແລະ ສູ້ຊົນເຮັດສຳເລັດໜ້າທີ່ ທີ່ການ ຈັດຕັ້ງພັກ-ລັດມອບໝາຍໃຫ້; ເປັນເຈົ້າການໃນການເປັນເສນາທິການໃຫ້ແກ່ສະພາປະຊາຊົນແຂວງ ກໍຄືຄະນະປະຈຳສະພາປະຊາຊົນແຂວງ ໃນການປະຕິບັດໜ້າທີ່ການເມືອງຂອງຕົນ ຕາມພາລະບົດບາດ ໃຫ້ໄດ້ຮັບຜົນດີ; ມີການແບ່ງວຽກ-ແບ່ງຄວາມຮັບຜິດຊອບພາຍໃນຄະນະປະທານ, ຄະນະຫ້ອງວ່າການ ໃຫ້ລະອຽດ, ຈະແຈ້ງ ແລະ ມີການປະເມີນກວດກາຢ່າງເປັນປະຈຳ; ເຊີດຊູຄວາມເປັນເຈົ້າການຕໍ່ໜ້າທີ່ການເມືອງ, ທຸ່ມເທເຫື່ອແຮງ, ສະຕິປັນຍາ, ຄວາມຮູ້ຄວາມສາມາດ, ມີຄວາມເສຍສະຫຼະ ເພື່ອເຮັດສຳເລັດໜ້າທີ່ ທີ່ຖືກມອບໝາຍ; ເປັນຫູເປັນຕາໃຫ້ແກ່ຄະນະພັກ, ຄະນະປະຈຳ ໃນການປະຕິບັດໜ້າທີ່ຂອງສະພາປະຊາຊົນແຂວງ, ບໍ່ປະປ່ອຍໃຫ້ມີຊ່ອງວ່າງໃນການສວຍໃຊ້ຂອງພວກບໍ່ຫວັງດີ; ເສີມຂະຫຍາຍ ຄວາມສາມັກຄີ ແລະ ປະຊາທິປະໄຕຢູ່ພາຍໃນຄະນະກຳມະການ, ຫ້ອງວ່າການ; ສືບທອດ ແລະ ເສີມຂະຫຍາຍມູນເຊື້ອຂອງລຸ້ນກ່ອນ ທັງເປັນເຈົ້າການປະດິດສ້າງເພື່ອປັບປຸງແບບແຜນວິທີເຮັດວຽກຢ່າງຕັ້ງໜ້າ, ຍົກສູງຄຸນນະພາບວຽກງານເສນາທິການ, ຕິດຕາມ ແລະ ຄົ້ນຄວ້າສ້າງນິຕິກຳ, ການຄົ້ນຄວ້າພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງແຂວງ, ຕິດພັນກັບການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ການປະຕິບັດໜ້າທີ່ການເມືອງຂອງບັນດາພະແນກການ ທີ່ສະພາປະຊາຊົນແຂວງເປັນຜູ້ຮັບຮອງເອົາການແຕ່ງຕັ້ງ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ; ເອົາໃຈໃສ່ວຽກງານສ້າງຄວາມເຂັ້ມແຂງ ໃຫ້ແກ່ສະມາຊິກພັກ-ພະນັກງານພາຍໃນສະພາປະຊາຊົນຢ່າງເປັນລະບົບ, ຕໍ່ເນື່ອງ ແລະ ຍຸຕິທຳ ຕາມແຜນລວມຂອງສະພາປະຊາຊົນແຂວງ.

**(ນາງ ໂສລະຢ້າ)**




# ກອງປະຊຸມຮ່ວມຄະນະປະຈຳ ສພຂ ກັບ ອົງການປົກຄອງແຂວງ



(ສພຂ) - ກອງປະຊຸມຮ່ວມ ລະຫວ່າງ ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນກັບອົງການອຳນາດລັດແຂວງຄຳມ່ວນ ເພື່ອປຶກສາຫາລື ແລະ ກະກຽມຄວາມພ້ອມໃຫ້ແກ່ການດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງຄຳມ່ວນ ຊຸດທີ V ໄດ້ຈັດຂຶ້ນໃນວັນທີ 23 ເມສາ 2026 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຮ່ວມຂອງທ່ານ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງ ແລະ ທ່ານ ສົມສະອາດ ອຸ່ນສິດາ ປະທານຄະນະກຳມະການປົກຄອງແຂວງພ້ອມດ້ວຍບັນດາຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການປົກຄອງແຂວງ, ບັນດາພະແນກການອ້ອມຂ້າງ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການຜ່ານບົດລາຍງານ ກ່ຽວກັບການກະກຽມຄວາມພ້ອມໃຫ້ແກ່ການດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງຄຳມ່ວນ ຊຸດທີ V ໂດຍສະເພາະບັນດາເອກະສານປື້ມອ້ອມຕ່າງໆ ເປັນຕົ້ນຮ່າງວາລະດຳເນີນກອງປະຊຸມ, ຮ່າງແຜນບັນຊາກອງປະຊຸມ, ຮ່າງບົດລາຍງານຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ກ່ຽວກັບຜົນສຳເລັດການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາປະຊາຊົນຂັ້ນແຂວງ, ຮ່າງເອກະສານທີ່ຕິດພັນກັບໂຄງປະກອບກົງຈັກ ແລະ ບຸກຄະລາກອນ ຂອງອົງການລັດຂັ້ນແຂວງ, ຮ່າງບົດປະກອບຄຳເຫັນ, ຄຳຖາມເຈາະຈີ້ມ, ຮ່າງມະຕິກອງປະຊຸມ ແລະ ອື່ນໆ; ພ້ອມນັ້ນ, ຍັງໄດ້ຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນຕໍ່ບັນດາເນື້ອໃນຕ່າງໆ ເພື່ອຮັບປະກັນໃຫ້ການພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ ຢູ່ໃນກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນຂັ້ນແຂວງ ຊຸດທີ V ມີຄຸນນະພາບສູງ, ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ, ກົມກຽວກັບນິຕິກຳທີ່ກ່ຽວຂ້ອງຂອງອົງການບໍລິຫານລັດຂັ້ນທ້ອງຖິ່ນ ທັງເພື່ອໃຫ້ມີຄວາມເປັນເອກະພາບ ຕໍ່ເນື້ອໃນທີ່ຈະນຳເຂົ້າຄົ້ນຄວ້າ ແລະ ພິຈາລະນາຮັບຮອງເອົາບັນຫາຕ່າງໆ ໃຫ້ບັນລຸຕາມລະດັບຄາດໝາຍທີ່ວາງໄວ້.

**(ເອື້ອ ມະໂນສິງ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

(ສພຊ) - ຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ໂພສີ ເຕັມເມລາດ ຮອງປະທານກຳມາທິການການຕ່າງປະເທດ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມປະຈຳປີຂອງເຈົ້າໜ້າທີ່ງົບປະມານລັດຖະສະພາອາຊີ ຄັ້ງທີ 4 ເຊິ່ງຈັດຂຶ້ນໂດຍອົງການຄຸ້ມຄອງພາກລັດ ແລະ ງົບປະມານ (OECD) ແລະ ຫ້ອງການງົບປະມານສະພາແຫ່ງຊາດ ສ.ເກົາຫຼີ (NABO) ໃນວັນທີ 15-17 ເມສາ 2026 ທີ່ນະຄອນຫຼວງເຊອຸນ, ສ.ເກົາຫຼີ ເຊິ່ງມີຜູ້ເຂົ້າຮ່ວມຈາກ 12 ພາກສ່ວນ, ໃນນີ້ມີ 4 ປະເທດສະມາຊິກລັດຖະສະພາອາຊຽນ ຄື: ລາຊະອານາຈັກກຳປູເຈຍ, ສປປລາວ, ຟີລິບປິນ ແລະ ສສ.ຫວຽດນາມ.

ຈຸດປະສົງກອງປະຊຸມແມ່ນສຸມໃສ່ການສ້າງຄວາມເຂັ້ມແຂງໃນການວິເຄາະວິໄຈຄວາມອາດສາມາດຂອງລັດຖະສະພາອາຊີ ກ່ຽວກັບການສ້າງຄວາມເຂົ້າໃຈດ້ານການເງິນພາກລັດໃຫ້ບັນດາສະມາຊິກລັດຖະສະພາ ແລະ ອົງການຈັດຕັ້ງສາກົນ, ການປະເມີນເອກະລາດກ່ຽວກັບການຄາດຄະເນງົບປະມານ ແລະ ການນຳໃຊ້ AI ເຂົ້າໃນວຽກງານງົບປະມານ; ນອກຈາກກອງປະຊຸມດັ່ງກ່າວແລ້ວ, ຍັງມີກອງປະຊຸມພິເສດກ່ຽວກັບການປະເມີນຄ່າໃຊ້ຈ່າຍຕໍ່ສະພາບການປ່ຽນແປງດິນຟ້າອາກາດທີ່ຮຸນແຮງແລະຜົນກະທົບຕໍ່ຄວາມຍືນຍົງທາງດ້ານງົບປະມານໄລຍະຍາວ ແລະ ຍັງໄດ້ເປີດໂອກາດໃຫ້ຜູ້ເຂົ້າຮ່ວມກອງປະຊຸມຈາກບັນດາລັດຖະສະພາອາຊີແລະອົງການຈັດຕັ້ງສາກົນ ໄດ້ປຶກສາຫາລື ແລະ ແລກປ່ຽນກ່ຽວກັບໂອກາດ ແລະ ສິ່ງທ້າທາຍໃນການວິເຄາະດ້ານງົບປະມານຮ່ວມກັນ. ໃນລະຫວ່າງການແລກປ່ຽນຄຳຄິດເຫັນແລະບົດຮຽນ, ທ່ານ ໂພສີ ເຕັມເມລາດ ໄດ້ນຳສະເໜີກ່ຽວກັບພາລະບົດບາດຂອງສະພາແຫ່ງຊາດລາວ ໃນວຽກງານງົບປະມານແຫ່ງລັດ ແລະ ມີຄຳເຫັນແລກປ່ຽນຕໍ່ກອງປະຊຸມສຳມະນາໃນລັກສະນະສ້າງສັນ ແລະ ກົງໄປກົງມາ ໂດຍສະເພາະການແກ້ໄຂບັນຫາທີ່ພົບເຫັນໃນເວລາຕິດຕາມກວດກາ ແລະ ການແກ້ໄຂຜົນການກວດສອບ-ກວດກາດ້ານງົບປະມານ.

ກອງປະຊຸມຄັ້ງນີ້ ໄດ້ປິດລົງດ້ວຍຜົນສຳເລັດອັນຈົບງາມ ແລະ ຈະມີການສືບຕໍ່ຈັດຂຶ້ນໃນແຕ່ລະປີຕາມລະບຽບການຂອງສະພາແຫ່ງຊາດ ສ.ເກົາຫຼີ.



## ຄະນະ...

(ຕໍ່ຈາກໜ້າ 1)

ປະເທດ ທີ່ເປັນສະມາຊິກ IPU ເຂົ້າຮ່ວມ, ໃນນີ້ ມີລະດັບປະທານລັດຖະສະພາ 65 ທ່ານ, ຮອງປະທານລັດຖະສະພາ 46 ທ່ານ ແລະ ສະມາຊິກລັດຖະສະພາ 720 ທ່ານ; ພ້ອມກັນນີ້, ຍັງມີຜູ້ຕາງໜ້າຈາກອົງການສະຫະປະຊາຊາດ, ຕົວແທນຈາກອົງການລັດຖະສະພາປະຈຳພາກພື້ນ ແລະ ອົງການຈັດຕັ້ງສາກົນຕ່າງໆ ເຂົ້າຮ່ວມຫຼາຍກວ່າ 1,500 ຄົນ.

ກອງປະຊຸມໃຫຍ່ຄັ້ງນີ້ ໄດ້ດຳເນີນໄປພາຍໃຕ້ຫົວຂໍ້: "ເສີມສ້າງຄວາມຫວັງ, ຮັບປະກັນສັນຕິພາບ ແລະ ຄວາມຍຸຕິທຳເພື່ອຄົນຮຸ່ນສືບທອດ" ພ້ອມດຽວກັນນີ້, ຍັງມີກອງປະຊຸມຄະນະບໍລິຫານງານ IPU; ກອງປະຊຸມກຳມາທິການຕ່າງໆຂອງ IPU ທີ່ຈັດຂຶ້ນຄວບຄູ່ກັນໄປເຊັ່ນ: ເວທີປາໄສສະມາຊິກລັດຖະສະພາເພດຍິງ IPU, ກອງປະຊຸມກຳມາທິການປະຈຳ ວ່າດ້ວຍສັນຕິພາບ ແລະ ຄວາມໝັ້ນຄົງສາກົນ, ກອງປະຊຸມກຳມາທິການປະຈຳ ວ່າດ້ວຍການພັດທະນາແບບຍືນຍົງ, ກອງປະຊຸມກຳມາທິການປະຈຳ ວ່າດ້ວຍປະຊາທິປະໄຕ ແລະ ສິດທິມະນຸດ, ກອງປະຊຸມກຳມາທິການປະຈຳ ວ່າດ້ວຍວຽກງານອົງການສະຫະປະຊາຊາດ, ເວທີປຶກສາຫາລືຂອງສະມາຊິກລັດຖະສະພາໜຸ່ມ, ກອງປະຊຸມກຸ່ມ ASEAN+3, ກອງປະຊຸມກຸ່ມອາຊີ-ປາຊີຟິກ, ກອງປະຊຸມຄັ້ງທີ 2 ຂອງກຸ່ມລັດຖະສະພາສະໜັບສະໜູນປາແລັດສະຕິນ, ກອງປະຊຸມເຄືອຂ່າຍລັດຖະສະພາຂະບວນການບໍ່ຮ່ວມກຸ່ມ ຄັ້ງທີ 5 ແລະ ກອງປະຊຸມປີ່ນອ້ອມຈຳນວນໜຶ່ງ.

ກອງປະຊຸມດັ່ງກ່າວນີ້, ຫົວໜ້າຄະນະຜູ້ແທນແຕ່ລະປະເທດ ໄດ້ຜັດປ່ຽນກັນຂຶ້ນກ່າວປາໄສ ໂດຍຮຽກຮ້ອງໃຫ້ສົ່ງເສີມລະບົບພະຫຸພາຄີ (ຫຼາຍຝ່າຍ) ແລະ ເພີ່ມທະວີບົດບາດຂອງສະຫະພັນລັດຖະສະພາສາກົນ ກໍຄືການທູດລັດຖະສະພາ ໃນການຊຸກຍູ້ການພົບປະສົນທະນາ, ສ້າງຄວາມໄວ້ເນື້ອເຊື່ອໃຈ, ແກ້ໄຂຂໍ້ຂັດແຍ່ງດ້ວຍສັນຕິວິທີບົນພື້ນຖານຂອງກົດໝາຍສາກົນ ແລະ ກົດບັດສະຫະປະຊາຊາດ.

ໂອກາດເຂົ້າຮ່ວມກອງປະຊຸມ, ທ່ານ ນາງ ສູນທອນ ໄຊຍະຈັກ ຫົວໜ້າຄະນະຜູ້ແທນລາວ ໄດ້ຂຶ້ນກ່າວປາໄສໃນກອງປະຊຸມໃຫຍ່ ໂດຍທ່ານໄດ້ຍົກໃຫ້ເຫັນສະພາບການຂອງໂລກທີ່ກຳລັງຜັນແປໄປຢ່າງສະຫຼັບຊັບຊ້ອນ ແລະ ເຕັມໄປດ້ວຍສິ່ງທ້າທາຍຮ້າຍແຮງ ທີ່ສົ່ງຜົນກະທົບຕໍ່ສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາແບບຍືນຍົງໃນທົ່ວໂລກ; ທ່ານຍັງໄດ້ເນັ້ນໜັກຕື່ມວ່າ ສປປລາວ ທີ່ເປັນປະເທດເຄີຍໄດ້ຮັບຜົນກະທົບຈາກສົງຄາມຮຸກຮານມາຫຼາຍທົດສະວັດ ຈຶ່ງເຫັນວ່າສັນຕິພາບ, ຄວາມຍຸຕິທຳ ແລະ ການພັດທະນາເສີມສ້າງສັນຕິພາບຜ່ານການເຈລະຈາ ແລະ ຄວາມຮັບຜິດຊອບຮ່ວມກັນທາງການເມືອງ, ສ້າງຄວາມໄວ້ເນື້ອເຊື່ອໃຈ, ຊຸກຍູ້ການແກ້ໄຂຂໍ້ຂັດແຍ່ງໂດຍສັນຕິວິທີບົນພື້ນຖານກົດໝາຍສາກົນ ແລະ ຫຼັກການກົດບັດສະຫະປະຊາຊາດ, ຄວາມຍຸຕິທຳ ຜ່ານການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ ຢ່າງເຂັ້ມງວດ, ໂປ່ງໃສ, ມີຄວາມຮັບຜິດຊອບ ແລະ ຖືເອົາປະຊາຊົນເປັນໃຈກາງ ແລະ ສ້າງເສດຖະກິດໂລກທີ່ເປັນທຳ ແລະ ຍືນຍົງ ເພື່ອຮັບປະກັນການເຕີບໂຕທາງດ້ານເສຖະກິດແລະຄຸນນະພາບຊີວິດຂອງປະຊາຊົນ.

ນອກຈາກນີ້, ຮອງປະທານສະພາແຫ່ງຊາດລາວ ຍັງໄດ້ເຂົ້າຮ່ວມ ແລະ ປະກອບຄຳເຫັນໃນເວທີປຶກສາຫາລືຂອງສະມາຊິກລັດຖະສະພາເພດຍິງ ເຊິ່ງທ່ານໄດ້ຕີລາຄາບົດບາດຂອງ IPU ໃນການສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງໃນເວທີການເມືອງ ພ້ອມທັງຍົກໃຫ້ເຫັນຈຳນວນສະມາຊິກສະພາແຫ່ງຊາດລາວ ຊຸດທີ X ໄດ້ເພີ່ມຂຶ້ນເປັນ 29.71%. ພ້ອມດຽວກັນນີ້, ທ່ານ ໂພໄຊ ໄຂຄຳພິທູນ ປະທານກຳມາທິການການຕ່າງປະເທດກໍໄດ້ເຂົ້າຮ່ວມ ແລະ ກ່າວຄຳເຫັນໃນກອງປະຊຸມເຄືອຂ່າຍລັດຖະສະພາຂະບວນການບໍ່ຮ່ວມກຸ່ມ ຄັ້ງທີ 5 ພາຍໃຕ້ຫົວຂໍ້: ບົດບາດຂອງລັດຖະສະພາ ໃນການຮັບປະກັນການຫັນເປັນຕົວເມືອງທີ່ທົນທານຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ.

ກອງປະຊຸມໃຫຍ່ຄັ້ງນີ້, ຄະນະຜູ້ແທນລາວ ຍັງໃຊ້ສິດລົງຄະແນນຮັບຮອງເອົາບັນຫາຮີບດ່ວນຂອງໂລກ ໂດຍສະເພາະແມ່ນການສົ່ງເສີມໃຫ້ມີການເຈລະຈາຢຸດຍິງ ແລະ ສ້າງສັນຕິພາບຍາວນານ ລະຫວ່າງສະຫະລັດ ແລະ ອີຣານ, ໄດ້ໃຊ້ສິດເລືອກຕັ້ງເລຂາທິການໃຫຍ່ IPU ຜູ້ໃໝ່ ເພື່ອປ່ຽນແທນທ່ານ ມາຕິນ ຈຶງກົງ (Martin Chungong) ທີ່ຈະໝົດວາລະລົງໃນວັນທີ 30 ມິຖຸນານີ້ ໂດຍທ່ານນາງອານດາຟີລິປ(Anda Filip) ຈາກປະເທດຣູມານີ ໄດ້ຮັບເລືອກເປັນເລຂາທິການໃຫຍ່ຜູ້ໃໝ່ຂອງ IPU ເຊິ່ງຈະດຳລົງຕຳແໜ່ງເປັນເວລາ 4 ປີ ແລະ ເປັນເລຂາທິການໃຫຍ່ຄົນທີ 9 ທີ່ເປັນແມ່ຍິງຄົນທຳອິດໃນອົງການດັ່ງກ່າວ; ພ້ອມກັນນີ້, ກອງປະຊຸມຍັງໄດ້ຮັບຮອງເອົາຍຸດທະສາດໃໝ່ຂອງ IPU ສຳລັບໄລຍະປີ 2027-2032 ແລະ ຮັບຮອງເອົາເຈົ້າພາບຈັດກອງປະຊຸມໃຫຍ່ IPU ຄັ້ງຕໍ່ໄປ ຄືຄັ້ງທີ 153 ເຊິ່ງຈະຈັດຂຶ້ນລະຫວ່າງວັນທີ 5-9 ຕຸລາ 2026 ທີ່ນະຄອນອາຣູຊາ, ປະເທດຕັງຊານີ, ທະວີບອາຟຣິກາ.

ໃນການເຂົ້າຮ່ວມກອງປະຊຸມ IPU 152, ຄະນະຜູ້ແທນລາວ ຍັງໄດ້ຖືໂອກາດພົບປະ ແລະ ໂອ້ລົມແບບສອງຝ່າຍກັບຄະນະຜູ້ແທນຈາກລັດຖະສະພາປະເທດເພື່ອນມິດ, ອົງການລັດຖະສະພາພາກພື້ນ ເຊັ່ນ: ຫວຽດນາມ, ເກຣັກ, ຣູມານີ, ກຳປູເຈຍ, ສິງກະໂປ, ມານຕາ, ຕີມໍແລັດສະເຕ, ຈີນ ແລະ ອື່ນໆ ເພື່ອແລກປ່ຽນຄຳຄິດຄຳເຫັນຕໍ່ເນື້ອໃນກອງປະຊຸມ ແລະ ປຶກສາຫາລືກ່ຽວກັບການພົວພັນຮ່ວມມືວຽກງານດ້ານນິຕິບັນຍັດລະຫວ່າງສະພາແຫ່ງຊາດລາວກັບປະເທດຕ່າງໆ.

# ມອບ-ຮັບໜ້າທີ່ຫົວໜ້າຫ້ອງວ່າການ ສພຂ ສາລະວັນ




(ສພຂ) - ວັນທີ 21 ເມສາ 2026, ທີ່ສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ມີພິທີມອບ-ຮັບໜ້າທີ່ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ລະຫ່ວາງຜູ້ເກົ່າ ແລະ ຜູ້ໃໝ່ ໂດຍການເຂົ້າຮ່ວມຂອງທ່ານ ຈັນສະໝອນ ພົມມະແສງ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ (ຜູ້ປະຈຳການ); ມີບັນດາທ່ານກຳມະການພັກແຂວງ, ຫົວໜ້າພະແນກການ, ຮອງພະແນກການອ້ອມຂ້າງແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການ, ຄະນະຫ້ອງວ່າການ ພ້ອມດ້ວຍຫົວໜ້າ ແລະ ຮອງຂະແໜງເຂົ້າຮ່ວມເປັນສັກຂີພະຍານ.

ທ່ານ ສົມພອນ ແສງສຸລິຈັນ ຄະນະປະຈຳສະພາປະຊາຊົນແຂວງຫ້ອງວ່າການສະພາປະຊາຊົນແຂວງ(ຜູ້ເກົ່າ) ໄດ້ຜ່ານບົດລາຍງານໂດຍຫຍໍ້ໃນໄລຍະຜ່ານມາ; ຈາກນັ້ນ, ໄດ້ຮັບຟັງການຜ່ານມະຕິກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງສາລະວັນ ຊຸດທີ V ວ່າດ້ວຍການພິຈາລະນາຮັບຮອງເອົາກົງຈັກການຈັດຕັ້ງຂອງສະພາປະຊາຊົນແຂວງ, ຮັບຮອງເອົາການສະເໜີແຕ່ງຕັ້ງປະທານຄະນະກຳມະການ ແລະ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງຊຸດທີ V ໃນນັ້ນ, ໄດ້ຮັບຮອງເອົາ ທ່ານ ສົມພອນ ແສງສຸລິຈັນ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ ເປັນປະທານຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ, ທ່ານ ບຸນທະວີ ພົມມະສານ ສະມາຊິກສະພາປະຊາຊົນແຂວງເປັນຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ແລະ ເຊັນບົດບັນທຶກມອບ-ຮັບໜ້າທີ່ໃໝ່ຢ່າງເປັນທາງການ.



## ເລຂາ...

(ຕໍ່ຈາກໜ້າ 1)

ລະກົດ 2026 ທີ່ນະຄອນຫຼວງວຽງຈັນ.

ໃນການເຂົ້າຢ້ຽມຂ່ຳນັບ, ທ່ານເລຂາທິການໃຫຍ່ອົງການສະພາທີ່ປຶກສາກ່ຽວກັບບັນຫານ້ຳຂອງລັດຖະສະພາອາຊີ ໄດ້ແຈ້ງໃຫ້ຊາບກ່ຽວກັບຄວາມເປັນມາ, ຈຸດປະສົງ ແລະ ເປົ້າໝາຍຂອງອົງການ ພ້ອມທັງລາຍງານຄວາມຄືບໜ້າການປະສານສົມທົບລະຫວ່າງສະພາແຫ່ງຊາດລາວກັບອົງການAAWC ໃນການກະກຽມເປັນເຈົ້າພາບຮ່ວມກັນໃນທ້າຍເດືອນກໍລະກົດນີ້; ນອກຈາກນັ້ນ, ຍັງໄດ້ແຈ້ງຈຸດປະສົງໃນການຊ່ວຍເຫຼືອກ່ຽວກັບໂຄງການການບໍລິຫານ-ການຄຸ້ມຄອງນ້ຳ ໃຫ້ແກ່ ສປປ ລາວ.

ໂອກາດນີ້, ທ່ານຮອງປະທານກຳມາທິການການຕ່າງປະເທດ ໄດ້ແຈ້ງສະພາບກ່ຽວກັບສະພາແຫ່ງຊາດ ຊຸດທີ X ແລະ ການກະກຽມຄວາມພ້ອມດ້ານຕ່າງໆຂອງກອງປະຊຸມທີ່ຈະຈັດຂຶ້ນໃນທ້າຍເດືອນກໍລະກົດ ໃຫ້ແກ່ຄະນະຜູ້ແທນອົງການ AAWC ຊາບ.

ຄະນະຜູ້ແທນອົງການ AAWC ຍັງໄດ້ເຂົ້າພົບການນຳຂອງກຳມາທິການການຕ່າງປະເທດ, ຢ້ຽມຊົມ ແລະ ວາງກະຕ່າດອກໄມ້ ທີ່ຫ້ອງມູນເຊື້ອຂອງສະພາແຫ່ງຊາດອີກດ້ວຍ.

## ຜົນສຳເລັດ...

(ຕໍ່ຈາກໜ້າ 1)

(ສພຊ) - ກອງປະຊຸມຄັ້ງປະຖົມມະລືກຂອງສະພາປະຊາຊົນແຂວງຫຼວງພະບາງ ຊຸດທີ V ໄດ້ດຳເນີນໄປເປັນເວລາ 1 ວັນເຄິ່ງ, ເຊິ່ງເລີ່ມແຕ່ວັນທີ 07-08 ເມສາ 2026, ພາຍໃຕ້ການເປັນປະທານຂອງທ່ານ ວົງສະຫວັນ ເທບພະຈັນ ປະທານສະພາປະຊາຊົນແຂວງ ຊຸດທີ IV ແລະ ທ່ານ ບຸນເລື່ອມ ມະນີວົງ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງ ຊຸດທີ V, ໃຫ້ກຽດເຂົ້າຮ່ວມກອງປະຊຸມໂດຍທ່ານປອ. ບຸນເຫຼືອ ສິນໄຊວໍຣະວົງ ຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານຄະນະກຳມະການປົກຄອງແຂວງ, ບັນດາອະດີດການນຳພັກ-ລັດ, ອະດີດສະມາຊິກສະພາແຫ່ງຊາດ, ອາດີດສະມາຊິກສະພາປະຊາຊົນແຂວງ, ມີບັນດາສະຫາຍຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ 6, ສະມາຊິກສະພາປະຊາຊົນແຂວງ ຊຸດທີ V, ມີບັນດາທ່ານຫົວໜ້າ-ຮອງຫົວໜ້າພະແນກການ, ກົມກອງ, ອົງການລັດທຽບເທົ່າພະແນກຂັ້ນແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມຄັ້ງປະຖົມມະລືກຂອງສະພາປະຊາຊົນແຂວງ ຊຸດທີ V, ໄດ້ສຳເລັດຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້ ເຊິ່ງກອງປະຊຸມ ໄດ້ສຸມໃສ່ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາ ວຽກງານສຳຄັນພື້ນຖານຂອງແຂວງ ແລະ ຂອງສະພາປະຊາຊົນແຂວງ ມີດັ່ງນີ້:

1. ວຽກງານກົງຈັກການຈັດຕັ້ງຂອງສະພາປະຊາຊົນແຂວງ ແລະ ສານປະຊາຊົນແຂວງ:

1) ໄດ້ຮັບຟັງການລາຍງານ ຈາກຄະນະກຳມະການເລືອກຕັ້ງຂັ້ນແຂວງ ກ່ຽວກັບຜົນສຳເລັດການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາປະຊາຊົນແຂວງ ຊຸດທີ V ຢູ່ເຂດເລືອກຕັ້ງ ນະຄອນ ແລະ ເມືອງ ມີ 60 ທ່ານ, ຍິງ 17 ທ່ານ ແລະ ມີສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ 6 ທີ່ຄອບໜ້າທີ່ເປັນສະມາຊິກສະພາປະຊາຊົນແຂວງ ຈຳນວນ 08 ທ່ານ; ລວມສະມາຊິກສະພາປະຊາຊົນແຂວງ ຊຸດທີ V ມີຈຳນວນທັງໝົດ 68 ທ່ານ, ຍິງ 19 ທ່ານ;

2) ໄດ້ພິຈາລະນາ ແລະ ຮັບຮອງເອົາການເລືອກຕັ້ງປະທານສະພາປະຊາຊົນແຂວງ ຊຸດທີ V ໂດຍໄດ້ເລືອກຕັ້ງເອົາທ່ານ ບຸນເລື່ອມ ມະນີວົງ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງເປັນປະທານສະພາປະຊາຊົນແຂວງຊຸດທີ V;

3) ຮັບຮອງເອົາການເລືອກຕັ້ງຮອງປະທານສະພາປະຊາຊົນແຂວງ ຊຸດທີ V ໂດຍເລືອກຕັ້ງເອົາທ່ານ ສຳນານ ສິນທະນີ ຄະນະປະຈຳພັກແຂວງ ແລະ ທ່ານ ສົມມາລີ ຄຳເກັ່ງ ກຳມະການພັກແຂວງ ເປັນຮອງປະທານສະພາປະຊາຊົນແຂວງ ຊຸດທີ V;

4) ຮັບຮອງເອົາການເລືອກຕັ້ງ ກຳມະການຄະນະປະຈຳ ສະພາປະຊາຊົນແຂວງ ຊຸດທີ V ມີ ຈຳນວນ 07 ທ່ານ ດັ່ງນີ້:

- ທ່ານ ບຸນເລື່ອມ ມະນີວົງ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ ເປັນປະທານຄະນະປະຈຳສະພາປະຊາຊົນແຂວງ;
- ທ່ານ ສຳນານ ສິນທະນີ ກຳມະການປະຈຳພັກແຂວງ ເປັນຮອງປະທານຄະນະປະຈຳສະພາປະຊາຊົນແຂວງ;
- ທ່ານ ສົມມາລີ ຄຳເກັ່ງ ກຳມະການພັກແຂວງເປັນຮອງປະທານຄະນະປະຈຳສະພາປະຊາຊົນແຂວງ;
- ທ່ານ ພົອ. ວິລະສິນ ມິດຕະພອນ ເປັນກຳມະການຄະນະປະຈຳສະພາປະຊາຊົນແຂວງ;
- ທ່ານ ສົມຈິດ ສີງລໍຄຳ ເປັນກຳມະການຄະນະປະຈຳສະພາປະຊາຊົນແຂວງ;
- ທ່ານ ອານຸສັກ ພອນສະຫວັນ ເປັນກຳມະການຄະນະປະຈຳສະພາປະຊາຊົນແຂວງ;
- ທ່ານ ປອ. ສົມໃຈ ຢ່າທໍ່ຕູ້ ເປັນກຳມະການຄະນະປະຈຳສະພາປະຊາຊົນແຂວງ.

5) ໄດ້ພິຈາລະນາ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງປະທານ ຄະນະກຳມະການ ແລະ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ຊຸດທີ V ມີດັ່ງນີ້:

- ທ່ານ ພົອ. ວິລະສິນ ມິດຕະພອນເປັນປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແລະຍຸຕິທຳ;
- ທ່ານ ສົມຈິດ ສີງລໍຄຳ ເປັນປະທານຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ;
- ທ່ານ ອານຸສັກ ພອນສະຫວັນ ເປັນປະທານຄະນະກຳມະການ ວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ;
- ແຕ່ງຕັ້ງທ່ານປອ. ສົມໃຈ ຢ່າທໍ່ຕູ້ ເປັນ ຫົວໜ້າ ຫ້ອງວ່າການສະພາປະຊາຊົນແຂວງ.



6) ໄດ້ຮັບຮອງເອົາການສະເໜີແຕ່ງຕັ້ງທ່ານຄຳພັນ ພົມມະລັດ ຜູ້ພິພາກສາຊັ້ນສີ່, ຮັກສາການປະທານສານປະຊາຊົນແຂວງ ເປັນ ປະທານສານປະຊາຊົນແຂວງຫຼວງພະບາງ;

7) ໄດ້ພິຈາລະນາ ແລະ ຮັບຮອງເອົາ ໂຄງປະກອບກົງຈັກການຈັດຕັ້ງ ຂອງສະພາປະຊາຊົນແຂວງ ຊຸດທີ V ປະກອບມີ: ຄະນະປະຈຳສະພາປະຊາຊົນແຂວງ; ຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍຸຕິທຳ; ຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ; ຄະນະກຳມະການວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ ແລະ ຫ້ອງວ່າການສະພາປະຊາຊົນແຂວງ, ຈາກນັ້ນໄດ້ຮັບຮອງເອົາກົງຈັກເສນາທິການ ຂອງສະພາປະຊາຊົນແຂວງ ເຊິ່ງປະກອບມີ 06 ຂະແໜງຄື: ຂະແໜງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍຸຕິທຳ; ຂະແໜງເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ; ຂະແໜງວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ; ຂະແໜງຄົ້ນຄວ້າ-ສັງລວມ ແລະ ຂໍ້ມູນຂ່າວສານ; ຂະແໜງຈັດຕັ້ງ ແລະ ກວດກາ; ຂະແໜງບໍລິຫານ ແລະ ການເງິນ.

2. ວຽກງານຄະນະກຳມະການປົກຄອງແຂວງ:

1) ພິຈາລະນາ ແລະ ຮັບຮອງເອົາການສ້າງຕັ້ງຕາແສງ ແລະ ຈຳນວນຕາແສງທົ່ວແຂວງຫຼວງພະບາງປະກອບມີທັງໝົດ 52 ຕາແສງ, ຢູ່ໃນ 01 ນະຄອນ ແລະ 11 ເມືອງ;

2) ຮັບຮອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງແຂວງ05 ປີ (2026-2030) ຂອງຄະນະກຳມະການປົກຄອງແຂວງ, ທີ່ໄດ້ນຳສະເໜີ07 ທິດທາງລວມ ແລະ 06 ເປົ້າໝາຍ ຂອງແຜນພັດທະນາເສດຖະກິດ-ສັງຄົມ 05ປີຄັ້ງທີX(2026-2030), ແຂວງຈະສູ້ຊົນເຮັດໃຫ້ເສດຖະກິດຂະຫຍາຍຕົວສະເລ່ຍ6,5% ຕໍ່ປີລວມຍອດຜະລິດຕະພັນພາຍໃນ(GDP) ໃຫ້ບັນລຸ24,097 ຕື້ 445 ລ້ານກີບ, ລາຍໄດ້ສະເລ່ຍຕໍ່ຫົວຄົນໃຫ້ໄດ້ 49 ລ້ານກີບ ຫຼື ເທົ່າກັບ 2,253 ໂດລາ, ໃນນີ້: ປີ 2030 ຂະຫຍາຍຕົວຢູ່ໃນລະດັບສະເລ່ຍ7 %, ລວມຍອດຜະລິດຕະພັນພາຍໃນ (GDP) ໃຫ້ບັນລຸ 25,984 ຕື້ກີບ, ສະເລ່ຍຕໍ່ຫົວຄົນໃຫ້ໄດ້ 52 ລ້ານກີບຕໍ່ປີ ຫຼື ເທົ່າກັບ 2,407 ໂດລາ, ໃນນີ້: ຂະແໜງການກະສິກຳ ຂະຫຍາຍຕົວ 6,1%, ຂະແໜງການອຸດສາຫະກຳ 7,5% ແລະ ຂະແໜງບໍລິການ 7,3%, ມອບໃຫ້ຄະນະກຳມະການປົກຄອງແຂວງ ສູ້ຊົນ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງແຂວງ05 ປີ (2026-2030) ໃຫ້ບັນລຸຜົນສຳເລັດ ເນື່ອງຈາກວ່າ ເປັນຄາດໝາຍທີ່ມີຄວາມສ່ຽງພໍສົມຄວນ ເມື່ອທຽບໃສ່ກັບສະພາບການຢູ່ພາຍນອກ ແລະ ພາຍໃນປະເທດ ອາດສົ່ງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ໃນຕໍ່ໜ້າສະເໜີ ໃຫ້ທຸກພາກສ່ວນເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຕາມຂອບເຂດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ສຳເລັດຕາມແຜນການທີ່ວາງໄວ້;

3) ຮັບຮອງແຜນການເຄື່ອນໄຫວວຽກງານ 05 ປີ (2026-2030) ຂອງອົງການກວດສອບປະຈຳພາກເໜືອ1, ກອງປະຊຸມໄດ້ສະແດງຄວາມຊົມເຊີຍ ຕໍ່ອົງການກວດສອບປະຈຳພາກເໜືອ1 ທີ່ໄດ້ສະເໜີແຜນການເຄື່ອນໄຫວ ໄດ້ຢ່າງລະອຽດ, ຊັດເຈນ ແລະ ມີເນື້ອໃນຄົບຖ້ວນ, ກອງປະຊຸມມອບໃຫ້ ອົງການກວດສອບປະຈຳພາກເໜືອ 1 ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ຄະນະກຳມະການປົກຄອງແຂວງ ເອົາໃຈໃສ່ໃນການຕິດຕາມກວດກາ, ພ້ອມທັງຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງ ແກ້ໄຂຕາມຜົນຂອງການກວດສອບຢ່າງເດັດຂາດ-ເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ, ເພື່ອຮັບປະກັນ ບໍ່ໃຫ້ຊັບສິນບັດ ແລະ ງົບປະມານຂອງລັດ ຕົກເຮ່ຍເສຍຫາຍ ແລະ ຕ້ອງດຳເນີນຄະດີ ຕໍ່ຜູ້ທີ່ລະເມີດກົດໝາຍຢ່າງເຂັ້ມງວດ;

4) ຮັບຮອງແຜນການເຄື່ອນໄຫວວຽກງານ 05 ປີ (2026-2030) ຂອງອົງການກວດກາລັດແຂວງ ກອງປະຊຸມໄດ້ຕີລາຄາສູງ ຕໍ່ອົງການກວດກາລັດແຂວງທີ່ໄດ້ສະເໜີແຜນການເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ກົດໝາຍໄດ້ກຳນົດໄວ້ໂດຍສະເພາະການສະກັດກັ້ນຕ້ານການສໍ້ລາດບັງຫຼວງ, ກອງປະຊຸມມອບໃຫ້ ໃຫ້ອົງການກວດກາລັດແຂວງ ເອົາໃຈໃສ່ແກ້ໄຂຜົນຂອງການກວດສອບ ແລະ ຜົນຂອງການກວດກາ ໃຫ້ເຂັ້ມງວດ ແລະ ເດັດຂາດ ທັງຮັບປະກັນການຍົກສູງຄຸນນະພາບ ຂອງວຽກງານກວດກາ.

3. ວຽກງານ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ:

1) ໄດ້ຮັບຮອງແຜນການເຄື່ອນໄຫວວຽກງານ 05 ປີ(2026-2030)ຂອງອົງການໄອຍະການປະຊາຊົນພາກເໜືອສະເພາະວຽກງານທີ່ຕິດພັນກັບແຂວງຫຼວງພະບາງ. ເຊິ່ງໄດ້ສະເໜີແຜນການເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດ ແລະໜ້າທີ່ຢ່າງລະອຽດຊັດເຈນ ກອງປະຊຸມມອບໃຫ້ອົງການໄອຍະການປະຊາຊົນພາກເໜືອຕິດຕາມກວດກາການເຄົາລົບແລະປະຕິບັດກົດໝາຍ ຂອງເຈົ້າໜ້າທີ່ອົງການສືບສວນ-ສອບສວນ, ສານປະຊາຊົນ, ກອງປະຕິບັດຄຳຕັດສິນຂອງສານ ແລະ ອົງການໄອຍະການແຂວງຢ່າງເຂັ້ມງວດ ພ້ອມດຽວກັນນັ້ນ ຕ້ອງໄດ້ສະໜອງຂໍ້ມູນ, ຂ່າວສານທາງດ້ານກົດໝາຍໃຫ້ອົງການໄອຍະການປະຊາຊົນແຂວງ, ຄົ້ນຄວ້າ ແລະ ສັງລວມລາຍງານກ່ຽວກັບ ການປະຕິບັດໜ້າທີ່ຂອງອົງການໄອຍະການປະຊາຊົນແຂວງ ໃຫ້ລະອຽດ ແລະ ຊັດເຈນ ເພື່ອແກ້ໄຂຂໍ້ຄົງຄ້າງໃຫ້ດີຂຶ້ນເປັນກ້າວໆ;

2) ຮັບຮອງແຜນການເຄື່ອນໄຫວວຽກງານ 05 ປີ (2026-2030) ຂອງສານປະຊາຊົນພາກເໜືອສະເພາະວຽກງານທີ່ຕິດພັນກັບແຂວງຫຼວງພະບາງ. ເຊິ່ງໄດ້ຍົກໃຫ້ເຫັນ ແຜນການເຄື່ອນໄຫວວຽກງານໄດ້ຢ່າງລະອຽດ, ຊັດເຈນ ພ້ອມທັງກຳນົດແຜນການ ແລະ ຄາດໝາຍສູ້ຊົນ ຂອງການເຄື່ອນໄຫວວຽກງານກອງປະຊຸມມອບໃຫ້ ສານປະຊາຊົນພາກເໜືອເອົາໃຈໃສ່ພິຈາລະນາຄະດີດ້ວຍຄວາມຖືກຕ້ອງ, ເປັນທຳປະຕິບັດວຽກງານໂດຍການຖືເອົາກົດໝາຍເປັນບ່ອນອີງ; ປະຕິບັດສິດ ແລະ ໜ້າທີ່ ເຕັມຄວາມສາມາດ ໄປຄຽງຄູ່ກັບກັບການຮັກສາຈັນຍາບັນ, ຈັນຍາທຳ ຂອງບຸກຄະລາກອນ ຜູ້ຮັບຜິດຊອບວຽກງານຢ່າງເຂັ້ມງວດ;

3) ຮັບຮອງແຜນການເຄື່ອນໄຫວວຽກງານ 05 ປີ (2026-2030) ຂອງອົງການໄອຍະການປະຊາຊົນແຂວງ ກອງປະຊຸມສະແດງຄວາມຊົມເຊີຍ ຕໍ່ການສະເໜີ ແຜນການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນແຂວງທີ່ໄດ້ນຳສະເໜີຕໍ່ກອງປະຊຸມ ເພື່ອເຮັດໃຫ້ແຜນການເຄື່ອນໄຫວວຽກງານບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍ ກອງປະຊຸມໄດ້ມອບໃຫ້ ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ, ສານປະຊາຊົນ, ກອງປະຕິບັດຄຳຕັດສິນຂອງສານ ແລະ ອົງການໄອຍະການປະຊາຊົນເຂດ ຢ່າງໃກ້ສິດຕິດແທດ ພ້ອມທັງປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍຢ່າງເຂັ້ມງວດ;

4) ຮັບຮອງແຜນການເຄື່ອນໄຫວວຽກງານ 05 ປີ (2026-2030) ຂອງສານປະຊາຊົນແຂວງ ກອງປະຊຸມເຫັນວ່າການສະເໜີແຜນການເຄື່ອນໄຫວວຽກງານ ມີຄວາມລະອຽດ, ມີເນື້ອໃນຄົບຖ້ວນເຖິງຢ່າງໃດກໍຕາມກອງປະຊຸມມອບໃຫ້ຮັກ

ອ່ານຕໍ່ໜ້າ 12




# ການປັບຕົວເຂົ້າກັບ ລັດທິທຶນນິຍົມ

\# ທິດດີ

ຜູ້ຂຽນໄດ້ນຳສະເໜີຫຼາຍບົດກ່ຽວກັບລັດທິທຶນນິຍົມ ໂດຍນຳສະເໜີບົດຂຽນກ່ຽວກັບ "ທຶນ" ໃນເສດຖະສາດການເມືອງຂອງທ່ານ ກາກ ມາກເຊິ່ງເພິ່ນຂຽນໄວ້ໃນປຶ້ມDASKAPITAL ຕໍ່ມາກໍໄດ້ສະເໜີເລື່ອງ: ລັດທິທຶນນິຍົມສະໄໝໃໝ່... ທີ່ນັກຄົ້ນຄວ້າຈາກ ສສ.ຫວຽດນາມ ເພິ່ນຂຽນໄວ້.

ມື້ນີ້ຢາກສະເໜີກ່ຽວກັບວິທີປັບຕົວເຂົ້າກັບລັດທິທຶນນິຍົມ ໃນສະໄໝຂ້າມຜ່ານກ້າວຂຶ້ນສັງຄົມນິຍົມ (ປຶ້ມລັດທິທຶນນິຍົມສະໄໝໃໝ່; ພາສາລາວ ໜ້າທີ 30-33 ສຳນັກພິມ ພິມຈຳໜ່າຍການເມືອງແຫ່ງຊາດ ສີເຖິດ ສສ.ຫວຽດນາມ ປີ 2025) ຂໍອະນຸຍາດສັງລວມ ດັ່ງນີ້:

- ກ່ຽວກັບວິທີປັບຕົວເຂົ້າກັບລັດທິທຶນນິຍົມ ໃນສະໄໝຂ້າມຜ່ານກ້າວຂຶ້ນສັງຄົມນິຍົມ

ກ. ມາກ ແລະ ຟ. ອັງແກນ ໄດ້ຢືນຢັນວ່າ ເຖິງແມ່ນລະບອບສັງຄົມນິຍົມ ຈະເປັນອະນາຄົດລວມຂອງມວນມະນຸດ ແຕ່ເສັ້ນທາງກ້າວໄປສູ່ສັງຄົມນິຍົມຢູ່ແຕ່ລະປະເທດ ກໍມີຄວາມແຕກຕ່າງກັນ, ຂຶ້ນກັບເງື່ອນໄຂປະຫວັດສາດຕົວຈິງ; ແຕ່ວ່າ, ລັກສະນະທົ່ວໄປຂອງຂະບວນວິວັດດັ່ງກ່າວນີ້ ແມ່ນຕ້ອງໃຊ້ເວລາຍາວນານ, ມີບັນດາບາດກ້າວພັດທະນາຄ່ອຍເປັນຄ່ອຍໄປ ເພື່ອສະສົມປັດໄຈດ້ານປະລິມານຂອງສັງຄົມນິຍົມ ກ່ອນທີ່ຈະສາມາດສ້າງການປ່ຽນແປງທາງດ້ານຄຸນນະພາບ. ດັ່ງນັ້ນ, ພວກເຮົາບໍ່ອາດອັດຕະວິໄສ, ຟ້າວຟັ່ງ, ຈູດເຜົາເວລາໃນການກໍ່ສ້າງສັງຄົມນິຍົມ ບໍ່ແມ່ນເພື່ອຢາກສ້າງໄດ້ສັງຄົມນິຍົມໃນທັນທີທັນໃດ ແລ້ວດັບສູນລະບອບກຳມະສິດເອກະຊົນທາງດ້ານພາຫະນະການຜະລິດ. ສິ່ງດັ່ງກ່າວນີ້, ໄດ້ຖືກ ຟ. ອັງແກນ ຊີ້ໃຫ້ເຫັນຢ່າງຈະແຈ້ງ ໃນນິພົນບັນດາຫຼັກມູນຂອງລັດທິກອມມູນິດ; ດັ່ງນີ້ "ບໍ່, ບໍ່ອາດ ກໍຄືກັບການທີ່ບໍ່ອາດເຮັດໃຫ້ກຳລັງການຜະລິດທີ່ມີຢູ່ປັດຈຸບັນສາມາດເພີ່ມຂຶ້ນໃນທັນທີທັນໃດ ຈົນເຖິງລະດັບຈຳເປັນ ເພື່ອສ້າງພື້ນຖານເສດຖະກິດກຳມະສິດສ່ວນລວມ". ສະນັ້ນ, ການປະຕິວັດຂອງຊົນຊັ້ນກຳມະຊີບພວມມີຄົບທຸກອາການ ແລະ ໃກ້ຈະລະເບີດຂຶ້ນ, ພຽງແຕ່ສາມາດດັດສ້າງສັງຄົມປັດຈຸບັນໄດ້ແບບຄ່ອຍເປັນຄ່ອຍໄປແລະ ມີແຕ່ເມື່ອໃດຫາກສາມາດສ້າງໄດ້ປະລິມານພາຫະນະການຜະລິດທີ່ຈຳເປັນ ໃຫ້ແກ່ການດັດສ້າງດັ່ງກ່າວ, ແມ່ນເມື່ອນັ້ນ ຈຶ່ງຈະສາມາດດັບສູນລະບອບກຳມະສິດເອກະຊົນໄດ້.

ສິ່ງທີ່ຄວນເອົາໃຈໃສ່ແມ່ນບໍ່ວ່າ ກ. ມາກ ກໍຄື ຟ. ອັງແກນ ໄດ້ຢືນຢັນວ່າ: ທິດສະດີຂອງຕົນບໍ່ແມ່ນບໍ່ອາດປ່ຽນແປງ ວ. ອີ. ເລນິນ ກໍໄດ້ກ່າວວ່າ: ກ. ມາກ ແລະ ຟ. ອັງແກນ ບໍ່ໄດ້ຜູກມັດໃຫ້ບັນດານັກປະຕິວັດອະນາຄົດ ໝູນໃຊ້ຫຼັກມູນທິດສະດີ ແລະ ແນວຄິດຂອງຕົນຢ່າງປະດິດສ້າງ. ຫຼັກມູນທິດສະດີດັ່ງກ່າວນີ້ ກໍມີການເສີມຂະຫຍາຍ ແລະ ປ່ຽນແປງໄປພ້ອມກັບການຂະຫຍາຍຕົວ ແລະ ການປ່ຽນແປງຂອງພຶດຕິກຳດຳລົງຊີວິດຕົວຈິງ ບົນພື້ນຖານບັນດາຫຼັກມູນພື້ນຖານຂອງຫຼັກມູນທິດສະດີດັ່ງກ່າວ, ສ່ວນ ຟ. ອັງແກນ ກໍໄດ້ຢໍ້າໄປຢໍ້າມາເຖິງແນວຄິດຂອງເພິ່ນ ແລະ ຂອງ ກ. ມາກ ວ່າ: "... ບໍ່ວ່າຢູ່ໃສ ແລະ ບໍ່ວ່າເວລາໃດ, ການນຳໃຊ້ບັນດາຫຼັກມູນດັ່ງກ່າວ ກໍຕ້ອງຂຶ້ນກັບແຕ່ລະສະພາບແວດລ້ອມປະຫວັດສາດສະໄໝນັ້ນ ແລະ ດ້ວຍເຫດນັ້ນ ບໍ່ຄວນຖືບັນດາມາດຕະການປະຕິວັດຫຼາຍເກີນໄປ".

ແນວຄິດກ່ຽວກັບການຂ້າມຜ່ານກ້າວຂຶ້ນສັງຄົມນິຍົມ ກໍຖືກ ຟ. ອັງແກນ ນຳສະເໜີຢ່າງຈະແຈ້ງຕໍ່ກັບຄຳຖາມວ່າ: "ຈະສາມາດດັບສູນລະບອບກຳມະສິດ ເອກະຊົນໄດ້ໃນທັນທີທັນໃດບໍ່?". ຄຳຕອບແມ່ນ: "ບໍ່ອາດ ແລະ ກໍຄືກັບການທີ່ບໍ່ອາດເຮັດໃຫ້ກຳລັງການຜະລິດທີ່ມີໃນປັດຈຸບັນ ສາມາດເພີ່ມຂຶ້ນໃນທັນທີທັນໃດ, ຈົນເຖິງລະດັບຈຳເປັນເພື່ອກໍ່ສ້າງພື້ນຖານເສດຖະກິດກຳມະສິດສ່ວນລວມ", ຍ້ອນວ່າ "ບໍ່ວ່າການປ່ຽນແປງໃດໆຂອງລະບອບສັງຄົມ, ບໍ່ມີການດັດສ້າງໃດໆທາງດ້ານການພົວພັນກຳມະສິດ ກໍລ້ວນແຕ່ເປັນໝາກຜົນອັນແນ່ນອນຂອງການສ້າງບັນດາກຳລັງການຜະລິດໃໝ່"; ດັ່ງນັ້ນ, ຕ້ອງເອົາໃຈໃສ່ທີ່ສຸດຕໍ່ການໝູນໃຊ້ຢ່າງຖືກຕ້ອງ ສາຍພົວພັນສັດຈະວິພາກ ລະຫວ່າງກຳລັງການຜະລິດ ແລະ ການພົວພັນການຜະລິດ ໃນພາລະກິດກໍ່ສ້າງສັງຄົມນິຍົມ.

ວ.ອີ. ເລນິນ ຍັງມີແຜນນະໂຍບາຍ ແລະ ການຈັດຕັ້ງປະຕິບັດລະບອບສຳປະທານ, ອະນຸຍາດໃຫ້ນາຍທຶນສາກົນໄດ້ເຂົ້າມາລົງທຶນໃນພື້ນຖານເສດຖະກິດເພື່ອຍາດແຍ່ງເອົາທຶນຮອນ, ເຕັກນິກ, ປະສົບການໃນການຄຸ້ມຄອງ, ພັດທະນາພື້ນຖານອຸດສາຫະກຳຂະໜາດໃຫຍ່, ມອບສິດດຳເນີນທຸລະກິດບາງຂະແໜງການໃຫ້ແກ່ນາຍທຶນແຫ່ງຊາດດ້ວຍການໃຫ້ເຊົ່າບັນດາລັດວິສາຫະກິດທີ່ລັດບໍ່ໄດ້ຖືສິດຜູກຂາດການດຳເນີນທຸລະກິດ, ອະນຸຍາດໃຫ້ນາຍທຶນ, ຊາວນາ, ກຳມະກອນ, ພະນັກງານ, ລັດຖະກອນ ຮັບເໝົາ ເພື່ອຂຸດຄົ້ນທີ່ດິນ, ເຂດປ່າໄມ້ຈຳນວນໜຶ່ງ ແລະ ເຂດບໍ່ແຮ່ຈຳນວນໜຶ່ງ ທີ່ລັດເຫັນວ່າຍັງບໍ່ທັນຈຳເປັນ ແລະ ຍັງບໍ່ທັນມີຄວາມອາດສາມາດລົງທຶນ, ລັດຈະເກັບຄ່າເຊົ່າທີ່ດິນເປັນຊັບສິ່ງຂອງ ຈາກນັ້ນ, ຈຶ່ງມີຜະລິດຕະພັນອອກສູ່ສັງຄົມ, ນຳໃຊ້ບັນດາສະຫະກອນຂອງບັນດາຜູ້ຜະລິດຂະໜາດນ້ອຍທີ່ນຳພາໂດຍນາຍທຶນນ້ອຍ ເພື່ອສະໜອງ ແລະ ບໍລິໂພກຜະລິດຕະພັນອຸດສາຫະກຳ ແລະ ກະສິກຳ; ສ້າງຕັ້ງບໍລິສັດການຄ້າປະສົມດ້ວຍທຶນຂອງລັດ, ທຶນພາຍໃນ ແລະ ທຶນຕ່າງປະເທດ ເພື່ອພັດທະນາການຄ້າກັບຕ່າງປະເທດ... ວ. ອີ. ເລນິນ ຖືວ່າສິ່ງເຫຼົ່ານີ້ເປັນຮູບແບບພື້ນຖານຂອງລັດທິທຶນນິຍົມພາຍໃຕ້ລະບອບຜະເດັດການກຳມະຊີບ. ລັດທິທຶນນິຍົມແຫ່ງລັດນີ້, ຕາມທັດສະນະ ວ. ອີ. ເລນິນ ແມ່ນບັນດາການພົວພັນການຜະລິດທຶນນິຍົມ ທີ່ອະນຸຍາດໃຫ້ມີການຄົງຕົວ ແລະ ຂະຫຍາຍຕົວພາຍໃຕ້ການຄວບຄຸມກວດກາຂອງລັດກຳມະຊີບ; ເຖິງຈະເປັນບາດກ້າວຖອຍຫຼັງທີ່ຈຳເປັນ ແລະ ກວມເອົາທັງຂໍ້ຂັດແຍ້ງ, ແຕ່ຖ້ານຳໃຊ້ຢ່າງຖືກຕ້ອງ, ມັນຈະມີຜົນກະທົບຢ່າງໃຫຍ່ຫຼວງຕໍ່ກັບຂະບວນວິວັດຫັນຈາກການຜະລິດຂະໜາດນ້ອຍໄປສູ່ການຜະລິດກົນຈັກຂະໜາດໃຫຍ່ແບບສັງຄົມ. ດ້ວຍທ່າໄດ້ປຽບຂອງການຜະລິດກົນຈັກຂະໜາດໃຫຍ່, ວິສາຫະກິດນາຍທຶນແຫ່ງລັດ ຈະເປັນຜູ້ຊ່ວຍເຫຼືອທີ່ເອົາການເອົາງານຂອງວິສາຫະກິດສັງຄົມນິຍົມ ໃນການພັດທະນາກຳລັງຜະລິດ ແລະ ຈະສ້າງຮູບແບບການແຂ່ງຂັນ ລະຫວ່າງວິສາຫະກິດສັງຄົມນິຍົມ ກັບ ວິສາຫະກິດທຶນນິຍົມ ເພື່ອເພີ່ມທະວີການຜະລິດສັງຄົມ ແລະ ລະບຽບວິໄນແຮງງານ, ຜະລິດຕະພັນທີ່ສະໜອງໂດຍວິສາຫະກິດທຶນນິຍົມຂອງລັດ ສາມາດຕອບສະໜອງຄວາມຕ້ອງການຂອງຜູ້ບໍລິໂພກ ແລະ ຄວາມຕ້ອງການການຜະລິດໄດ້ຢ່າງວ່ອງໄວ, ເຕັກນິກທີ່ສະໜອງໂດຍການສຳປະທານຂອງນາຍທຶນສາກົນ ຈະຊ່ວຍໃຫ້ສາມາດດັດສ້າງດ້ານເຕັກນິກຂອງບັນດາຂະແໜງການຜະລິດພື້ນຖານເສດຖະກິດແຫ່ງຊາດໄດ້ຢ່າງວ່ອງໄວ; ດ້ວຍຜົນກະທົບດັ່ງກ່າວ, ຕາມທັດສະນະຂອງ ວ. ອີ. ເລນິນ ແມ່ນວ່າລັດທິທຶນນິຍົມແຫ່ງລັດ ແມ່ນຂົວຕໍ່ລະຫວ່າງກາງເພື່ອຂ້າມຜ່ານຈາກລັດທິທຶນນິຍົມໄປສູ່ສັງຄົມນິຍົມເທື່ອລະກ້າວ.

ແນວໃດກໍຕາມ, ເສັ້ນທາງຂອງລັດທິທຶນນິຍົມແຫ່ງລັດໃນໄລຍະຂ້າມຜ່ານຈາກລັດທິທຶນນິຍົມໄປສູ່ສັງຄົມນິຍົມ ບໍ່ແມ່ນໄລຍະສັນຕິຊົນຊັ້ນ, ແຕ່ຫາກມີການຕໍ່ສູ້ຊົນຊັ້ນພາຍໃຕ້ຮູບການອື່ນ, ສົງຄາມທາງເສດຖະກິດ, ບໍ່ລະເວັ້ນອຸບາຍໂຄ່ນລົ້ມ, ແຕ່ຊົນຊັ້ນກຳມະກອນບໍ່ມີເຫດຜົນຫຍັງທີ່ຈະຢ້ານກົວສິ່ງດັ່ງກ່າວ, ຍ້ອນວ່າ... ອຳນາດການປົກຄອງຢູ່ໃນກຳມືຂອງພວກເຮົາ ແລະ ອາດຈະລົງໂທດຢ່າງບໍ່ຢໍາເກງຕໍ່ພວກນາຍທຶນ ທີ່ບໍ່ເຄົາລົບ ແລະ ປະຕິບັດລະບຽບການ, ຂໍ້ກຳນົດຢ່າງເຂັ້ມງວດ.

ຈາກຂໍ້ມູນຂ້າງເທິງນັ້ນ ສະແດງໃຫ້ເຮົາເຫັນແຈ້ງເຖິງບົດບາດຂອງ ເສດຖະກິດເອກະຊົນທີ່ພວກເພິ່ນໝູນໃຊ້ເຂົ້າໃນການສ້າງສາພັດທະນາປະເທດຊາດ ຂອງແຕ່ລະປະເທດ ໂດຍສະເພາະແມ່ນປະເທດທີ່ມີຈຸດໝາຍສູ່ສັງຄົມນິຍົມຄືປະເທດເຮົາ.

ສະນັ້ນ ການທີ່ໃນບົດກ່ອນ ຜູ້ຂຽນຍົກໃຫ້ເຫັນເຖິງບົດບາດຂອງເສດຖະກິດເອກະຊົນທີ່ມີຜູ້ຂະໜານນາມໃຫ້ວ່າ ເປັນຊັ້ນຄົນນາຍທຶນແດງ ກໍຖືວ່າເປັນກຽດສັກສີຂອງພວກເພິ່ນທີ່ເຕີບໂຕຂຶ້ນໃນລະບອບໃໝ່ ຮັ່ງມີຂຶ້ນໃນລະບອບໃໝ່ ທີ່ຄົນໃນໂລກມັກໃຫ້ສາຍາລະບອບໃໝ່ວ່າ ລະບອບສີແດງ ກໍຄືດັ່ງປະທານ ສຸພານຸວົງ ຜູ້ນຳທີ່ຍິ່ງໃຫຍ່ຂອງພວກເຮົາ ທີ່ເພິ່ນຍອມສະຫຼະເຊື້ອເຈົ້າມາເຮັດການປະຕິວັດ ກໍຖືກຂະໜານນາມວ່າ: ເຈົ້າຊາຍແດງ ແລ້ວຊັ້ນຄົນນາຍທຶນແດງທີ່ບຸກບືນສ້າງຄວາມຮັ່ງມີໃຫ້ແກ່ປະເທດຊາດ-ບ້ານເມືອງ ແກ່ເຊື້ອສາຍວົງສະກຸນ ກໍຄືພວກເພິ່ນເອງ ກໍຍິ່ງເໝາະສົມກັບຄຳຂະໜານນາມດັ່ງກ່າວ ຂໍສະເໜີແລກປ່ຽນ.



## ທາລື...

(ຕໍ່ຈາກໜ້າ 1)

ນົດໄວ້ໃນແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ໄດ້ຮັບການສ້າງ ແລະ ປັບປຸງສຳເລັດຕາມແຜນການ ກໍຄືການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໃຫ້ເປັນກົດໝາຍທີ່ຮັບໃຊ້ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ແນໃສ່ເຮັດໃຫ້ການສ້າງ ແລະ ປັບປຸງກົດໝາຍ ກາຍເປັນເຄື່ອງມືທີ່ສຳຄັນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ, ການສ້າງລັດປະຊາທິປະໄຕປະຊາຊົນລາວ ໃຫ້ກາຍເປັນລັດທີ່ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍເທື່ອລະກ້າວ.

ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການກົດໝາຍ ແລະ ຍຸຕິທຳ ໄດ້ລາຍງານກ່ຽວກັບການກະກຽມຄວາມພ້ອມຮ່າງກົດໝາຍທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝວິສາມັນ ແລະ ສະໄໝສາມັນປະຈຳປີ ຂອງ ສພຊ ຊຸດທີ X ເຊິ່ງທ່ານໄດ້ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ເອົາໃຈໃສ່ວຽກງານປະເມີນຜົນການຈັດຕັ້ງປະຕິບັດກົດໝາຍທີ່ປະກາດໃຊ້ໄປແລ້ວ ກໍຄືການປະເມີນຕີລາຄາຄຸນນະພາບໃນການສ້າງກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ; ເພີ່ມທະວີຄວາມຮັບຜິດຊອບໃນການປະຕິບັດກົດໝາຍວ່າດ້ວຍການສ້າງນິຕິກຳ ໃຫ້ມີຄວາມເຂັ້ມງວດກວ່າເກົ່າ; ຄົ້ນຄວ້າ, ວິເຄາະວິໄຈ ໃຫ້ລະອຽດເລິກເຊິ່ງ ເຖິງເຫດຜົນ ແລະ ຄວາມຈຳເປັນຂອງການປັບປຸງກົດໝາຍ ຕາມທິດຫັນໄປສູ່ຄຸນນະພາບ ເພື່ອເຮັດໃຫ້ກົດໝາຍມີຄວາມສັກສິດ; ເພີ່ມທະວີຄວາມຮັບຜິດຊອບຕໍ່ວຽກງານໂຄສະນາເຜີຍແຜ່ກົດໝາຍ ລວມທັງການຈັດສັນງົບປະມານໃຫ້ແກ່ການສ້າງ, ການປັບປຸງ ແລະ ການໂຄສະນາເຜີຍແຜ່ກົດໝາຍ ເຂົ້າໃນແຜນງົບປະມານແຫ່ງລັດ; ປັບປຸງກົນໄກການປະສານງານໃນວຽກງານສ້າງ ແລະ ປັບປຸງກົດໝາຍ ລະຫວ່າງສະພາແຫ່ງຊາດ ກັບ ພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມກົມກຽວ, ຄ່ອງຕົວກວ່າເກົ່າ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນຄົ້ນຄວ້າ, ປະກອບຄຳເຫັນ ແລະ ເລືອກເຟັ້ນຮ່າງກົດໝາຍທີ່ຜ່ານການທາບທາມແລ້ວ, ກົດໝາຍທີ່ກຳລັງດຳເນີນການຄົ້ນຄວ້າ ແລະ ກົດໝາຍອື່ນທີ່ມີຄວາມຈຳເປັນຮີບດ່ວນຕິດພັນການພັດທະນາເສດຖະກິດ-ສັງຄົມ ທີ່ອົງການຂອງຕົນເຫັນວ່າມີຄວາມກຽມພ້ອມແລ້ວ ສາມາດນຳສະເໜີເຂົ້າກອງປະຊຸມສະໄໝວິສາມັນຂອງສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງເອົາ.

**(ນາງ ອາລິນ ສຸພົມມະປະດິດ)**



ສຸຂະສະບາຍຫາຍໂຣຄາ

# ເລືອດຈາງຈາກການຂາດທາດເຫຼັກ ກັບອາຫານທີ່ຄວນກິນ

# ຮຽບຮຽງໂດຍ: ທອມສະນິດ



ທາດເຫຼັກ ຄື ສານອາຫານທີ່ມີສ່ວນສຳຄັນໃນການຜະລິດເຮໂມໂກຼບິນ (hemoglobin), ໄມໂອໂກຼບິນ ແລະ ເອັນຊາຍບາງຊະນິດ ຮວມທັງຍັງເປັນສານທີ່ມີຄວາມຈຳເປັນຕໍ່ຂະບວນການເຜົາຜານວິຕາມິນບີ ໂດຍສະເພາະວິຕາມິນຊີ, ໂຄບອລແມງການີສ ແລະ ທອງແດງ ເຊິ່ງເປັນສານທີ່ມີຄວາມສຳຄັນຕໍ່ການດູດຊຶມຂອງທາດເຫຼັກ. ແຕ່ທັງນີ້, ວິຕາມິນອີ ແລະ ສັງກະສີ ທີ່ມີຢູ່ໃນຮ່າງກາຍໃນປະລິມານຫຼາຍນັ້ນ ຈະຂັດຂວາງການດູດຊຶມຂອງທາດເຫຼັກ ສ່ວນທາດເຫຼັກທີ່ເຮົາກິນເຂົ້າໄປກໍມັກຈະເກີດການດູດຊຶມເຂົ້າສູ່ກະແສເລືອດໄດ້ພຽງແຕ່ 8% ເທົ່ານັ້ນ.

- ປະລິມານທາດເຫຼັກທີ່ຮ່າງກາຍຕ້ອງການຕໍ່ວັນ:

ໃນແຕ່ລະມື້ຮ່າງກາຍຄົນເຮົາຕ້ອງກາຍທາດເຫຼັກຢູ່ປະມານ 1 mg ເພື່ອທົດແທນໂຕເກົ່າທີ່ສູນເສຍໄປໃນແຕ່ລະວັນ ແຕ່ທັງນີ້ຮ່າງກາຍກໍສາມາດດູດຊຶມທາດເຫຼັກໄດ້ພຽງແຕ່ 5-10% ເທົ່ານັ້ນ ເມື່ອທຽບກັບຈຳນວນທີ່ກິນລົງໄປ ດັ່ງນັ້ນເຮົາຈຶ່ງຄວນບໍລິໂພກທາດເຫຼັກໃຫ້ໄດ້ມື້ລະ 10-30 mg.

- ກິນຫຍັງຈຶ່ງໄດ້ທາດເຫຼັກ:

ທາດເຫຼັກພົບໄດ້ໃນຜັກ ແລະ ຊີ້ນສັດ ແຕ່ຮ່າງກາຍດູດຊຶມທາດເຫຼັກຈາກຊີ້ນສັດໃຫຍ່, ສັດປີກ ແລະ ອາຫານທະເລໄດ້ດີກວ່າທາດເຫຼັກຈາກພືດ, ຜັກ, ໄຂ່, ຖົ່ວ ແລະ ນົມ ທັງນີ້ປະລິມານຂອງທາດເຫຼັກທີ່ຄວນໄດ້ຮັບໃນແຕ່ລະວັນຂຶ້ນຢູ່ກັບເພດ, ອາຍຸແລະບັນຫາສຸຂະພາບຂອງແຕ່ລະຄົນນຳ.

- ແຫຼ່ງອາຫານທີ່ມີທາດເຫຼັກໄດ້ແກ່:

1. ຜັກໃບຂຽວ ຍິ່ງຜັກມີສີຂຽວເຂັ້ມຍິ່ງອຸດົມໄປດ້ວຍທາດເຫຼັກ ເຊັ່ນ: ຜັກຫົມ, ຜັກກາດນາ, ບັອກໂຄລີ່ ເປັນຕົ້ນ ອີກທັງການຮັບປະທານຜັກໃບຂຽວຮ່ວມກັບອາຫານທີ່ມີວິຕາມິນຊີສູງເຊັ່ນໝາກກ້ຽງ, ໝາກນາວ, ລະແຊັງ, ສະຕໍເບີຣີ່, ໝາກເຜັດໃຫຍ່ ແລະ ໝາກຮຸ່ງ ຈະຊ່ວຍໃຫ້ຮ່າງກາຍດູດຊຶມທາດເຫຼັກໄດ້ດີຍິ່ງຂຶ້ນ.

2. ຊີ້ນສັດ ຮວມເຖິງຊີ້ນສັດປີກທຸກຊະນິດເຊິ່ງລ້ວນປະກອບໄປດ້ວຍທາດເຫຼັກ ໂດຍສະເພາະຊີ້ນແດງ ແລະ ຫາກຮັບປະທານເນື້ອສັດຮ່ວມກັບຜັກໃບຂຽວ ຈະຊ່ວຍໃຫ້ຮ່າງກາຍດູດຊຶມທາດເຫຼັກ ໄດ້ດີຍິ່ງຂຶ້ນດ້ວຍເຊັ່ນກັນ.

3. ຕັບ ອຸດົມໄປດ້ວຍທາດເຫຼັກ ແລະ ອາຊິດໂຟລິກ ນອກຈາກຕັບແລ້ວອະໄວຍະວະອື່ນໆ ກໍມີທາດເຫຼັກສູງດ້ວຍ ເຊັ່ນ ຫົວໃຈ, ໄຕ ແລະ ລີ້ນ ເຖິງຢ່າງໃດກໍຕາມ ການຮັບປະທານຕັບເພື່ອເສີມທາດເຫຼັກອາດບໍ່ເໝາະກັບແມ່ຍິງຖືພາ ແລະ ຄວນປຶກສາແພດກ່ອນຮັບປະທານອາຫານຊະນິດນີ້ເພື່ອຄວາມປອດໄພຂອງແມ່ ແລະ ລູກໃນທ້ອງ.

4. ອາຫານທະເລ ໂດຍສະເພາະກຸ້ງ, ຫອຍນາງລົມ, ແລະຫອຍລາຍ... ລ້ວນເປັນແຫຼ່ງອາຫານຂອງທາດເຫຼັກ ອີກທັງປາສ່ວນໃຫຍ່ກໍຍັງປະກອບໄປດ້ວຍທາດເຫຼັກ ໂດຍສະເພາະປາຕາດຽວ, ປາຊາດີນ, ປາທູ ແລະ ປາແຊລມ່ອນ.

5. ທັນຍາພືດເຊັ່ນ: ຖົ່ວແດງ, ຖົ່ວເຫຼືອງ, ຖົ່ວດຳ, ຖົ່ວດິນ, ຖົ່ວລັນເຕົາ, ເມັດໝາກອຶ, ເມັດແອລມ່ອນ, ແກ່ນຕາເວັນ ແລະ ໝາກມ່ວງຫິມະພານ ເປັນຕົ້ນ...

6. ອາຫານອື່ນໆ ເຊັ່ນ: ໄຂ່, ດາກຊັອກໂກແລັດ, ໂກໂກ້, ເຂົ້າໜົມປັງໂຮລເກຼນ, ຜົງກະຫຼີ່ ແລະ ອາຫານເສີມທາດເຫຼັກ ເປັນຕົ້ນ...

**ແຫຼ່ງຂໍ້ມູນ: ສຸຂະພາບມາກ່ອນ**




# ເງິນ ງານ ສຸຂະພາບ

# ນົວບາງບຶງ

| | |
|---|---|
| ✻ ເງິນງານຂອງຄູ່ຄ້ຳ<br>ເຮົາຕ້ອງເປັນຕົວຫຼັກ<br>ຢ່າຖະແຫຼງແປງເວົ້າ<br>ບາດເມື່ອທ້າຍຊວດຮູ້ | ທຽມທຽບຄືເງົາ<br>ທ່ຽງຈິງຈະແຈ້ງ<br>ເອົາແຕ່ເງິນງານລ່າຍ<br>ຊີຕົກຕ້ອຍຕ່ຳຕົນຈິງແທ້! |
| ✻ ງານດຸ່ງເດີນດ່ວນດັ້ນ<br>ງານງຽບເງິນເຫີຍຫາຍ<br>ເປັນຈອງຈອຍຈຸກຈ້ອງ<br>ພຽງຢາກເຫັນແຕ່ເບິ້ງ | ເງິນດັນດຸ່ງມາຫາ<br>ສະງັ່ກງໍງີ້ງ້ອງ<br>ນອນຫງາຍງໍ້ງ່ຽງ<br>ງານໂຫງ້ຍງັດເງິນ ຊິເປັນບໍ! |
| ✻ ງານເດີນດີກະເພາະໄດ້<br>ຖ້າຂາດເງິນງານຫາຍ<br>ງານ ແລະ ເງິນຈຶ່ງຄອຍຄ້ຳ<br>ມີສິ່ງບັງແປດຊົ້ນ | ເງິນງ່າຍຂອງຫຼາຍ<br>ວັບລີງບໍ່ເຫັນຈ້ອຍ<br>ຄຽງການຝ້າວຝັ່ງ<br>ກໍຖາງໝົ້ນກົ່ນຫາ ຈິງແລ້ວ! |
| ✻ ແຕ່ຂໍຢ່າໄດ້ເກືອກກົ້ວ<br>ຈົນລືມເພນລືມງາຍ<br>ຈົນຈ່ອຍຜອມຜາງແຫ້ງ<br>ມີເງິນຫຼາຍຊີວິດໜ້ອຍ | ມົວແຕ່ນຳເງິນຫຼາຍເດີ<br>ບໍ່ພັກກາຍພໍນ້ອຍ<br>ກາຍໂຊໂຕລ່ອຍ<br>ຕາຍຈ້ອຍກໍເພາະເງິນ ກຸ້ມບໍ່! |
| ✻ ຂໍໃຫ້ຄິດໄຂວ່ຄົ້ນ<br>ສິ້ນພະຊົນມໍລະນາ<br>ບໍ່ອາດເອົາໄປພ້ອມ<br>ຍາມຊີບດັບມອດມ້ວຍ | ຄົນຮັ່ງມີຈົນ<br>ສິ່ງຫາມາໄດ້<br>ເງິນຄຳສິນຊັບ<br>ໄປຕັ້ງແຕ່ຕົວ ທ່ານເອີຍ ! |



ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສຽມທ້ຽນ

✻ **ປີ**ໃໝ່ລາວລາເລີກແລ້ວ ຈົບຈາກຈອບໄປ ບາງຄົນຍັງອາໄລ ເທດການອັນນັ້ນ ຍາມນັ່ງນອນຍັງຝັນເພີ້ ລະເມີບ່າຄວາມເກົ່າ ຄິດຮອດຄາວເມື່ອຄັ້ງ ສະຫຼອງຫຼິ້ນມ່ວນມັນ ບາງຄົນນັ້ນຍັງຝັນວ່າຈັບໄມ ບາງຄົນຍັງອາໄລ ອະດີດຫວານແສນຊຶ້ງ ບາງຜ່ອງຊຶງລຶງເສົ້າ ຜິດຫວັງຫຼັງປີໃໝ່ ເປັນແນວໃດກະຊ່າງທ້ອນ ຂໍໃຫ້ພົ້ນຜ່ານໄປສາເນີ ປີໃໝ່ໃຈຕັ້ງ ກະທ່ານແຕ່ຄວາມດີ ຫາກຊິມີຄົນເຫັນ ຄ່າຄຸນຄວາມດີສ້າງ ທຸກເສັ້ນທາງເດີນກ້າວ ເອົາຄວາມດີຄຽງຄູ່ ບຸນຊິບ່າສິ່ງຢູ້ ສົມຫວັງໄດ້ດັ່ງມະໂນ **ດອກບາ!**

✻ **ກົມ**ອຸຕຸນິຍົມ ແລະ ອຸທົກກະສາດ ໄດ້ອອກແຈ້ງການເຕືອນພະຍາກອນອາກາດໃນໄລຍະນີ້ ອາກາດຈະສືບຕໍ່ຮ້ອນອົບເອົ້າ ແລະ ອາດຈະມີຝົນໝາກເຫັບ ພ້ອມທັງຟ້າເຫຼື້ອມ ລົມພັດແຮງເປັນບາງໂອກາດ ອາກາດຮ້ອນເຮັ່ງຮ້າຍ ສຸລິຈີ່ເຜົາຜານ ວາໂຍເທາະເທີນພັດ ຕ່ອຍຕີຕ່ຳຕ້ອງອາຄານເຮືອນທ່າຫ້ອງ ເພພັງທະລາຍມຸ່ນ ດຸດັ່ງອົງເທບໄທ້ ພະອິນໂກທາຮ້າຍໂກດເຄືອງ ຫຼາຍບ້ານເມືອງຄືກ ພາຍຸພັດຜ່ານເສົ້າ ປັດເປົ່າເສຍຫາຍ ຍິນແຕ່ຫຼາຍຄົນຈາ ຈົ່ມໂຈມຕີເອົ້າ ເປັນຍ້ອນເຮົາຕັດໄມ້ ທຳລາຍຜືນປ່າ ປວງປະຊາຈຶ່ງເດືອດຮ້ອນ ຄືດ້ານດັ່ງເຫັນ **ໜ່າຍເດ!**

## ຊອບຍິ້ມ

# ພົ້ງລຶ່ງ

## ເລື່ອງ: ບໍ່ອ່ານດອກ

**ເມຍ:** ບໍ່ອ່ານພອກເຮົາຈະເກັບເງິນ ຫຼື ເຊື່ອງເງິນໄວ້ບ່ອນໃດ ລູກຫົວແກ້ວຫົວແຫວນຂອງເຈົ້າກໍຊອກຫາຈົນເຫັນ ແລ້ວລັກເອົາໄປໄດ້ທຸກເທື່ອ ຈົນຂ້ອຍບໍ່ຮູ້ຊິເຮັດແນວໃດ, ເຈົ້າວ່າຂ້ອຍຄວນຊິເອົາເງິນໄວ້ຢູ່ໃສດີ?

**ຜົວ:** ກໍເອົາໄປໄວ້ໃນປຶ້ມແບບຮຽນມັນຫັ້ນເດ, ມັນບໍ່ອ່ານດອກ...



## ສຸພາສິດ-ຄະຕິເຕືອນໃຈ

# ດອກຫຍ້າ

ຢ້ານແຕ່ຖີ່ງບໍ່ສົມເສື້ອ ເຮືອພາຍບໍ່ສົມທ່າ
ຕົວຂະໃຫ້ມ່າເສົ້າໄວ້ ໄທບ້ານເພີ່ນບໍ່ມາ




## ສະພາ Turkey ລົງມະຕິຫ້າມເດັກອາຍຸຕ່ຳກວ່າ 15 ປີ ໃຊ້ເວທີສື່ສັງຄົມ Norway ຈະສະເໜີ ກົດໝາຍຈຳກັດອາຍຸເດັກໃນການໃຊ້ສື່ສັງຄົມ

(AFP, Xinhua) - ວັນທີ 22 ເມສາຜ່ານມາ, ສະພາແຫ່ງຊາດຕວັກກີ ໄດ້ຮັບຮອງຮ່າງກົດໝາຍຫ້າມເດັກອາ ຍຸຕ່ຳກວ່າ 15 ປີ ເຂົ້າເຖິງເວທີສື່ສັງຄົມ; ພາຍໃຕ້ກົດໝາຍສະບັບນີ້, ເດັກອາຍຸຕ່ຳກວ່າ 15 ປີ ຈະຖືກຫ້າມບໍ່ໃຫ້ສ້າງບັນ ຊີສື່ສັງຄົມ, ຂະນະທີ່ເວທີດິຈິຕອນ ຈະຕ້ອງຕິດຕັ້ງລະບົບຢືນຢັນອາຍຸ.

ຄາດວ່າປະທານາທິບໍດີ ເຣເຊບ ໄຕຢິບ ເອີໂດກັນ (Recep Tayyip Erdogan) ຈະລົງນາມໃນກົດໝາຍດັ່ງກ່າວ, ເຊິ່ງຈະມີຜົນບັງຄັບໃຊ້6ເດືອນ ຫຼັງຈາກການເຜີຍແຜ່ໃນຈົດໝາຍເຫດທາງລັດຖະການ.

ຫາກໄດ້ຮັບການແຈ້ງເຕືອນ "ເຫດສຸກເສີນ", ເວທີສື່ສັງຄົມທີ່ສຳຄັນ ຈະຕ້ອງເຂົ້າແຊກແຊງພາຍໃນ 1 ຊົ່ວໂມງຫຼັງຈາກມີການໂພສເນື້ອຫາທີ່ເປັນອັນຕະລາຍທາງອອນລາຍ.

ນອກຈາກຕວັກກີແລ້ວ, ຝຣັ່ງ ຍັງເປັນຜູ້ນຳໃນການຊຸກຍູ້ບັນຫານີ້ຮ່ວມກັບພັນທະມິດໃນEUເຊັ່ນ:ດານມາກ,ເກຣັກ ແລະ ແອັດສະປາຍ ເຊິ່ງໄດ້ຮັບແຮງຈູງໃຈຈາກກົດໝາຍຂອງອົດສະຕຣາລີ ທີ່ຫ້າມຜູ້ມີອາຍຸຕ່ຳກວ່າ 16 ປີ ໃຊ້ສື່ສັງຄົມ.

ລັດຖະບານນອກແວ ກ່າວເມື່ອວັນສຸກທີ 24 ເມສາວ່າ ມີແຜນທີ່ຈະສະເໜີຮ່າງກົດໝາຍຕໍ່ລັດຖະສະພາໃນປີນີ້ເພື່ອກຳນົດອາຍຸຂັ້ນຕ່ຳສຳລັບເດັກໃນການໃຊ້ສື່ສັງຄົມ; ພາຍໃຕ້ກົດໝາຍທີ່ສະເໜີ, ເດັກຈະໄດ້ຮັບອະນຸຍາດໃຫ້ໃຊ້ສື່ສັງຄົມຕັ້ງແຕ່ວັນທີ 1 ມັງກອນຂອງປີທີ່ພວກເຂົາອາຍຸຄົບ 16 ປີ, ລັດຖະບານກ່າວໃນຖະແຫຼງການ. ບໍລິສັດເຕັກໂນໂລຊີ ຈະເປັນຜູ້ຮັບຜິດຊອບໃນການກວດສອບອາຍຸຂອງຜູ້ໃຊ້ທີ່ເປັນເຍົາວະຊົນເມື່ອພວກເຂົາເຂົ້າສູ່ລະບົບ.

ນາຍົກລັດຖະມົນຕີນອກແວ ໂຈນາສ ກາ ສະໂຕເຣ (Jonas Gahr Store) ກ່າວວ່າ ລັດຖະບານມີແຜຈະສະເໜີຮ່າງກົດໝາຍດັ່ງກ່າວກ່ອນສິ້ນປີນີ້, ໂດຍກ່າວຕື່ມວ່າ ມີຈຸດປະສົງເພື່ອປົກປ້ອງຊີວິດດິຈິຕອນຂອງເດັກ.

ລັດຖະບານກ່າວວ່າ ນອກແວ ແມ່ນໜຶ່ງໃນບັນດາປະເທດທຳອິດໃນເອີຣົບ ທີ່ສະເໜີກົດໝາຍກຳນົດຂໍ້ຈຳກັດດ້ານອາຍຸສຳລັບສື່ສັງຄົມ ແລະ ຫຼາຍປະເທດໃນເອີຣົບລວມທັງຝຣັ່ງ, ດານມາກ, ແອັດສະປາຍ ແລະ ປອກຕຸຍການ ກຳລັງພິຈາລະນາຮູບແບບທີ່ຄ້າຍຄືກັນ.



## ຜູ້ມີສິດເລືອກຕັ້ງ 50.5 ລ້ານ ລົງທະບຽນ ສຳລັບການເລືອກຕັ້ງທົ່ວໄປຂອງ Ethiopia



(Xinhua) - ຄະນະກຳມະການເລືອກຕັ້ງແຫ່ງຊາດຂອງເອທິໂອປີ(National Election Board of Ethiopia-NEBE) ປະກາດວ່າ ມີຜູ້ມີສິດເລືອກຕັ້ງຫຼາຍກວ່າ 50.5 ລ້ານຄົນ ລົງທະບຽນເພື່ອເຂົ້າຮ່ວມການເລືອກຕັ້ງທົ່ວໄປທີ່ຈະຈັດຂຶ້ນໃນວັນທີ 1 ມິຖຸນານີ້; ນາງ ເມລາທໍຣິກ ໄຮລູ (Melatwork Hailu) ປະທານ NEBE ກ່າວໃນການຖະແຫຼງຂ່າວຕໍ່ສື່ມວນຊົນເມື່ອວັນພະຫັດທີ 23 ເມສາຜ່ານມາວ່າ ມີພົນລະເມືອງທັງໝົດ 50,514,155 ຄົນລົງທະບຽນສຳລັບການເລືອກຕັ້ງທົ່ວໄປຄັ້ງທີ 7 ຂອງປະເທດ.

ການລົງທະບຽນຜູ້ມີສິດເລືອກຕັ້ງ ເຊິ່ງເລີ່ມຕົ້ນເມື່ອວັນທີ 7 ມີນາ ໄດ້ສຳເລັດຢ່າງເປັນທາງການໃນວັນທີ 22 ເມສາ, ຂະບວນການນີ້ ດຳເນີນການຜ່ານລະບົບປະສົມປະສານທີ່ລວມເອົາວິທີການດິຈິຕອນ ແລະ ວິທີການລົງທະບຽນດ້ວຍຕົນເອງ.

ຕາມທີ່ປະທານກ່າວ, ຜູ້ມີສິດເລືອກຕັ້ງຫຼາຍກວ່າ 5.5 ລ້ານຄົນ ລົງທະບຽນຜ່ານເວທີດິຈິຕອນ (digital platform), ໃນຂະນະທີ່ສ່ວນໃຫຍ່ ລົງທະບຽນດ້ວຍຕົນເອງ; ໄຮລູ ຍັງກ່າວອີກວ່າ ຄະນະກຳມະການໄດ້ສຳເລັດການລົງທະບຽນຜູ້ສະໝັກຮັບເລືອກຕັ້ງ, ໂດຍດຳເນີນການຕັ້ງແຕ່ວັນທີ 9 ມັງກອນຫາ 8 ກຸມພາ ເຊິ່ງເປັນສ່ວນໜຶ່ງຂອງການກະກຽມສຳລັບການເລືອກຕັ້ງ.

ຕາມຂໍ້ມູນຂອງຄະນະກຳມະການ, ແມ່ຍິງຄິດເປັນ 46%, ໃນຂະນະທີ່ຜູ້ຊາຍຄິດເປັນ 54% ຂອງຜູ້ມີສິດເລືອກຕັ້ງທັງໝົດທີ່ລົງທະບຽນສຳລັບການເລືອກຕັ້ງທົ່ວໄປ.

ກ່ອນໜ້ານີ້, NEBE ປະກາດວ່າ ການລົງທະບຽນຜູ້ມີສິດເລືອກຕັ້ງໄດ້ເລີ່ມຂຶ້ນທີ່ໜ່ວຍເລືອກຕັ້ງ 46,750 ແຫ່ງທົ່ວປະເທດໃນອາຟຣິກາຕາເວັນອອກແຫ່ງນີ້ ແລະ ການແຈກຢາຍອຸປະກອນການເລືອກຕັ້ງສ່ວນໃຫຍ່ສຳເລັດແລ້ວເພື່ອຮັບປະກັນໃຫ້ຂະບວນການດຳເນີນໄປຢ່າງສະດວກ.

ຕົ້ນປີນີ້, ຄະນະກຳມະການ ໄດ້ເປີດຕົວເວທີດິຈິຕອນແຫ່ງທຳອິດຂອງປະເທດ ເພື່ອປັບປຸງການລົງທະບຽນຜູ້ມີສິດເລືອກຕັ້ງ ແລະ ຜູ້ສະໝັກຮັບເລືອກຕັ້ງໃຫ້ທັນສະໄໝຂຶ້ນ; ເວທີດັ່ງກ່າວ ປະກອບມີແອັບພລິເຄຊັນມືຖື ແລະ ໂປຣແກຣມທ່ອງເວັບ, ກ່າວກັນວ່າສະທ້ອນໃຫ້ເຫັນເຖິງການລິເລີ່ມທີ່ກວ້າງຂວາງຂອງ NEBE ໃນການປັບປຸງລະບົບການເລືອກຕັ້ງຂອງປະເທດໃຫ້ທັນສະໄໝຂຶ້ນ ໂດຍຜ່ານການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ.

## ລັດຖະສະພາ Algeria ຮັບຮອງຮ່າງກົດໝາຍກຳນົດ ໃຫ້ການລ່າອານານິຄົມຂອງຝຣັ່ງ ເປັນຄວາມຜິດທາງອາຍາ



(Xinhua) - ສະພາສູງອານເຊຣີ ໄດ້ຮັບຮອງຮ່າງກົດໝາຍເມື່ອວັນອາທິດທີ 12 ເມສາຜ່ານມາ ກຳນົດໃຫ້ການລ່າອານານິຄົມຂອງຝຣັ່ງ ເປັນຄວາມຜິດທາງອາຍາ, ຫຼັງຈາກໜຶ່ງເດືອນທີ່ສະພາຕ່ຳໄດ້ຜ່ານຮ່າງກົດໝາຍດຽວກັນນີ້.

ກົດໝາຍສະບັບນີ້ ເຊິ່ງປະກາດວ່າການລ່າອານານິຄົມຂອງຝຣັ່ງໃນອານເຊຣີລະຫວ່າງປີ 1830-1962 ເປັນ ຄວາມຜິດທາງອາຍາ, ເຈົ້າໜ້າທີ່ກ່າວວ່າ ເປັນ "ບາດກ້າວສຳຄັນໃນການຮັກສາຄວາມຊົງຈຳຂອງຊາດ ແລະ ໃຫ້ກຽດແກ່ການເສຍສະຫຼະທີ່ເກີດຂຶ້ນໃນໄລຍະຍຸກອານານິຄົມ".

ໃນເດືອນທັນວາ2025, ສະພາຕ່ຳໄດ້ຮັບຮອງຮ່າງກົດໝາຍຢ່າງເປັນເອກະສັນ ຮຽກຮ້ອງໃຫ້ຝຣັ່ງຂໍໂທດຢ່າງເປັນທາງການ ແລະ ຢືນຢັນສິດຂອງອານເຊຣີ ໃນການຮຽກຮ້ອງຄ່າຊົດເຊີຍ.

ຢ່າງໃດກໍຕາມ, ປະທານາທິບໍດີອັບເດລມາຈິດເຕບບູນ (Abdelmadjid Tebboune) ໄດ້ຊີ້ແຈງໃນພາຍ ຫຼັງວ່າ ອານເຊຣີ ຕ້ອງການໃຫ້ຝຣັ່ງຍອມຮັບຄວາມຜິດຂອງຕົນ ຫຼາຍກວ່າການຊົດເຊີຍທາງການເງິນ; ດ້ວຍເຫດນີ້, ຈຶ່ງມີການສ້າງຕັ້ງກຳມາທິການຮ່ວມຂອງລັດຖະສະພາ ເພື່ອແກ້ໄຂຄວາມບໍ່ເຫັນດີລະຫວ່າງສອງສະພາ ແລະ ຮ່າງຂໍ້ຄວາມທີ່ເປັນເອກະພາບ.

ມີລາຍງານວ່າສະບັບສຸດທ້າຍທີ່ທັງສອງສະພາຮັບຮອງນັ້ນ ໄດ້ຍົກເລີກຂໍ້ກຳນົດກ່ຽວກັບການຊົດເຊີຍຄວາມເສຍຫາຍ ແລະ ການຂໍໂທດຈາກຝຣັ່ງ, ແຕ່ຍັງຮັກສາຂໍ້ກຳນົດທີ່ກ່ຽວຂ້ອງກັບຜູ້ເຄາະຮ້າຍຈາກການທົດສອບນິວເຄລຍຂອງຝຣັ່ງໃນທະເລຊາຍຊາຮາຣາ.

ຄວາມແຕກແຍກທາງການທູດລະຫວ່າງອານເຊຣີແລະຝຣັ່ງ ທະວີຄວາມຮຸນແຮງຂຶ້ນໃນໄລຍະມໍ່ໆມານີ້ ໂດຍເກີດຈາກຂໍ້ຂັດແຍ້ງກ່ຽວກັບການເຂົ້າເມືອງ, ຄວາມບໍ່ພໍໃຈໃນອະດີດ ແລະ ການສະໜັບສະໜູນຂອງຝຣັ່ງຕໍ່ມາຣົກ ກ່ຽວກັບຊາຮາຣາຕາເວັນຕົກ. ເຕບບູນ ຢືນຢັນວ່າ ການເຈລະຈາໂດຍກົງກັບປະທານາທິບໍດີຝຣັ່ງ ເອັມມານູເອວ ມາຄຣົງ (Emmanuel Macron) ແມ່ນວິທີດຽວທີ່ຈະແກ້ໄຂບັນຫາສອງຝ່າຍເຫຼົ່ານີ້.

# ສະພາ Venezuela ອະນຸມັດ ການປະຕິຮູບກົດໝາຍບໍ່ແຮ່

(Xinhua)-ວັນພະຫັດທີ 9 ເມສາຜ່ານມາ, ສະພາແຫ່ງຊາດເວເນຊູເອລາ ໄດ້ອະນຸມັດຢ່າງເປັນເອກະສັນຕໍ່ການປະຕິຮູບກົດໝາຍບໍ່ແຮ່ຂອງປະເທດ ເຊິ່ງເປັນການເປີດຂະແໜງການນີ້ ໃຫ້ແກ່ການລົງທຶນຂອງເອກະຊົນ ແລະ ຕ່າງປະເທດ; ກົດໝາຍສະບັບນີ້ ມີ 137 ມາດຕາ ຄວບຄຸມກິດຈະກຳບໍ່ແຮ່ທົ່ວປະເທດ ແລະ ວາງຂອບທາງກົດໝາຍສຳລັບການລົງທຶນທັງພາຍໃນ ແລະ ຕ່າງປະເທດ.

ປະທານສະພາແຫ່ງຊາດ ຮໍຣ໌ເກ ໂຣດຣິເກຊ (Jorge Rodriguez) ກ່າວວ່າ ກົດໝາຍສະບັບນີ້ ວາງພື້ນຖານສຳລັບການສ້າງຕັ້ງບໍລິສັດຮ່ວມທຶນ ແລະ ເປັນກຸນແຈສຳຄັນໃນການສົ່ງເສີມການພັດທະນາເສດຖະກິດຂອງປະເທດ ແລະ ປັບປຸງຂະແໜງການບໍ່ແຮ່ໃຫ້ທັນສະໄໝ.

ການປະຕິຮູບນີ້ ອະນຸຍາດໃຫ້ບໍລິສັດຕ່າງປະເທດແລະບໍລິສັດເອກະຊົນ ຫຼື ກຸ່ມບໍລິສັດຮ່ວມທຶນ ສາມາດເຂົ້າຮ່ວມໃນການການສະກັດເອົາຄຳ ແລະ ແຮ່ທາດທາງຍຸດທະສາດອື່ນໆ; ສຳປະທານອາດມີໄລຍະເວລາເຖິງ 30 ປີ ແລະ ສາມາດຕໍ່ອາຍຸໄດ້ສອງຄັ້ງ, ຄັ້ງລະ 10 ປີ.

ກົດໝາຍຍັງຢືນຢັນການເປັນເຈົ້າຂອງຊັບພະຍາກອນແຮ່ທາດຂອງລັດ, ໃນຂະນະທີ່ຂໍ້ຂັດແຍ້ງອາດໄດ້ຮັບການແກ້ໄຂໂດຍຜ່ານການໄກ່ເກ່ຍ; ການຂາຍຄຳຈະດຳເນີນການໂດຍທະນາຄານກາງຂອງເວເນຊູເອລາ.

ຮ່າງກົດໝາຍນີ້ ຈະຖືກສົ່ງໄປຍັງສານສູງສຸດຂອງເວເນຊູເອລາເພື່ອຕັດສິນວ່າຖືກຕ້ອງຕາມລັດຖະທຳມະນູນຫຼືບໍ່.



# ກຳປູເຈຍ ອະນຸມັດຮ່າງກົດໝາຍ ຕ້ານການຫຼອກລວງທາງອອນລາຍ

(Xinhua) - ເນດ ພຽກຕຣາ (Neth Pheaktra) ລັດຖະມົນຕີກະຊວງຖະແຫຼງຂ່າວ ກ່າວວ່າ ລັດຖະບານກຳປູເຈຍ ອະນຸມັດຮ່າງກົດໝາຍວ່າດ້ວຍການຕໍ່ຕ້ານການຫຼອກລວງທາງອອນລາຍ ເມື່ອວັນສຸກທີ 13 ມີນານີ້ ເຊິ່ງຈະກຳນົດການລົງໂທດຢ່າງຮຸນແຮງຕໍ່ຜູ້ຫຼອກລວງ; ການອະນຸມັດດັ່ງກ່າວ ມີຂຶ້ນລະຫວ່າງກອງປະຊຸມຄະນະລັດຖະມົນຕີປະຈຳອາທິດ ເຊິ່ງມີນາຍົກລັດຖະມົນຕີ ຮຸນ ມາເນັດ (Hun Manet) ເປັນປະທານ.




“ກົດໝາຍສະບັບນີ້ ແມ່ນເຄື່ອງມືທາງກົດໝາຍທີ່ສຳຄັນທີ່ສຸດສຳລັບກຳປູເຈຍ ໃນການຕໍ່ສູ້ກັບການຫຼອກລວງທາງອອນລາຍ, ການຟອກເງິນ ແລະ ສະແດງໃຫ້ເຫັນວ່າ ກຳປູເຈຍ ບໍ່ແມ່ນສະຫວັນ ຫຼື ບ່ອນລີ້ໄພ ສຳລັບອາຊະຍາກອນ; ກຳປູເຈຍ ບໍ່ແມ່ນ ແລະ ຈະບໍ່ມີວັນເປັນ ບ່ອນລີ້ໄພສຳລັບອາຊະຍາກອນ ຫຼອກລວງທາງອອນລາຍ” ພຽກຕຣາ ກ່າວກັບຊິນຮວາ ທັງເສີມວ່າ: ຮ່າງກົດໝາຍສະບັບນີ້ ຈະຊ່ວຍປ້ອງກັນ ແລະ ກຳຈັດການຫຼອກລວງທາງອອນລາຍອອກຈາກດິນແດນກຳປູເຈຍ.

ພາຍໃຕ້ຮ່າງກົດໝາຍ, ຫົວໜ້າສູນຫຼອກລວງທາງອອນລາຍ ຈະຕ້ອງຮັບໂທດຕັດອິດສະລະພາບລະຫວ່າງ 5-10 ປີ ແລະ ປັບໃໝສູງສຸດ 1 ຕື້ຣຽລ (riel) ຫຼື ປະມານ 250,000 ໂດລາ ແລະ ຫາກພົບວ່າການກະທຳຂອງພວກເຂົາ ມີສ່ວນກ່ຽວຂ້ອງກັບຄວາມຮຸນແຮງ, ການທໍລະມານ, ການກັກຂັງທີ່ຜິດກົດໝາຍ, ການຄ້າມະນຸດ ຫຼື ການບັງຄັບໃຊ້ແຮງງານ, ພວກເຂົາຈະຕ້ອງຮັບໂທດຕັດອິດສະລະພາບ 10-20 ປີ ແລະ ປັບໃໝສູງສຸດ 2 ຕື້ຣຽລ (ປະມານ 500,000 ໂດລາ); ນອກຈາກນັ້ນ, ຫົວໜ້າກຸ່ມຫຼອກລວງທາອອນລາຍ ຈະຕ້ອງຮັບໂທດຕັດອິດສະລະພາບ 15-30 ປີ ຫຼື ຕະຫຼອດຊີວິດ ຫາກການກະທຳຂອງພວກເຂົານຳໄປສູ່ການເສຍຊີວິດໜຶ່ງຄົນ ຫຼື ຫຼາຍກວ່ານັ້ນ, ຮ່າງກົດໝາຍລະບຸຕື່ມວ່າ ຜູ້ຫຼອກລວງທາງອອນລາຍ ຈະຕ້ອງຮັບໂທດຕັດອິດສະລະພາບ 2-5 ປີ ແລະ ປັບໃໝສູງສຸດ 500 ລ້ານຣຽລ (ປະມານ 125,000 ໂດລາ).

ຮ່າງກົດໝາຍສະບັບນີ້ ຈະຕ້ອງໄດ້ຮັບການຮັບຮອງຈາກສະພາແຫ່ງຊາດ ແລະ ຜ່ານການກວດຄືນຂັ້ນສຸດທ້າຍໂດຍສະພາສູງ ກ່ອນທີ່ຈະສົ່ງໄປຍັງກະສັດ ນໍໂຣດົມ ສີຫາໂມນີ (Norodom Sihamoni) ເພື່ອປະກາດໃຊ້.

ປະເທດໃນອາຊີຕາເວັນອອກສຽງໃຕ້ແຫ່ງນີ້ ໄດ້ເລີ່ມດຳເນີນການປາບປາມເຄືອຂ່າຍການຫຼອກລວງທາງອິນເຕີເນັດທົ່ວປະເທດຢ່າງທີ່ບໍ່ເຄີຍມີມາກ່ອນ ເພື່ອຮັກສາສະຖຽນລະພາບທາງສັງຄົມ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງປະຊາຊົນ, ແລະ ເພື່ອຟື້ນຟູພາບພົດຂອງລາຊະອານາຈັກໃນເວທີສາກົນ ໂດຍທາງການໃຫ້ຄຳໝັ້ນສັນຍາວ່າຈະກຳຈັດສູນກາງການຫຼອກລວງທາງອອນລາຍທັງໝົດພາຍໃນເດືອນເມສາປີນີ້.

ສາຣ໌ ໂສກາ (Sar Sokha) ລັດຖະມົນຕີກະຊວງພາຍໃນ ກ່າວວ່າ: ກຳປູເຈຍ ໄດ້ເນລະເທດຊາວຕ່າງຊາດທີ່ຖືກສົງໄສວ່າເປັນຜູ້ຫຼອກລວງຫຼາຍກວ່າ 30,000 ຄົນ, ຂະນະທີ່ອີກກວ່າ 210,000 ຄົນ ໄດ້ອອກຈາກລາຊະອານາຈັກດ້ວຍຄວາມສະໝັກໃຈ ຫຼັງຈາກປະຕິບັດການຕໍ່ຕ້ານການສໍ້ໂກງທາງອອນລາຍທີ່ເຂັ້ມງວດຂຶ້ນນັບຕັ້ງແຕ່ເດືອນມິຖຸນາປີຜ່ານມາ.

# Byambatsogt ໄດ້ຮັບເລືອກເປັນ ປະທານລັດຖະສະພາມົງໂກລີຜູ້ໃໝ່




(Xinhua) - ສະພາຄູຣານໃຫຍ່ເຊິ່ງເປັນລັດຖະສະພາແບບສະພາດຽວຂອງມົງໂກລີ ໄດ້ເລືອກ ຊານດັກ ບະຢຳບັດໂຊກ (Sandag Byambatsogt) ເປັນປະທານລັດຖະສະພາຜູ້ໃໝ່ເມື່ອວັນສຸກທີ 3 ເມສາຜ່ານມາ ໃນກອງປະຊຸມຄົບຄະນະຂອງລັດຖະສະພາທີ່ມີທັງໝົດ 126 ທີ່ນັ່ງເຊິ່ງມີສະມາຊິກລັດຖະສະພາ ເຂົ້າຮ່ວມ 114 ຄົນ ໂດຍມີຄະແນນສຽງເຫັນດີແຕ່ງຕັ້ງເຂົາ 76.3%.

ບະຢຳບັດໂຊກ ເຂົ້າມາແທນ ນຽມ-ໂອຊໍຣ໌ ອຸຊຣານ (Nyam-Osor Uchral) ປະທານພັກປະຊາຊົນມົງໂກລີ ທີ່ໄດ້ຮັບການແຕ່ງຕັ້ງເປັນນາຍົກລັດຖະມົນຕີເມື່ອວັນຈັນທີ 30 ມີນາ ຫຼັງຈາກອະດີດນາຍົກລັດຖະມົນຕີ ກອມໂບຈາວ ຊານດັນຊາຕາຣ໌ (Gombojav Zandanshatar) ລາອອກຈາກຕຳແໜ່ງຕາມຄວາມປະສົງຂອງຕົນເອງເມື່ອວັນສຸກທີ 27 ມີນາ.

ບະຢຳບັດໂຊກອາຍຸ 51 ປີ ໄດ້ຮັບເລືອກຕັ້ງເຂົ້າສູ່ລັດຖະສະພາ 5 ສະໄໝ ແລະ ດຳລົງຕຳແໜ່ງສຳຄັນໃນລັດຖະບານຫຼາຍຕຳແໜ່ງ ລວມທັງລັດຖະມົນຕີກະຊວງຍຸຕິທຳແລະກິດຈະການພາຍໃນ, ລັດຖະມົນຕີກະຊວງພັດທະນາຖະໜົນແລະການຂົນສົ່ງ, ລັດຖະມົນຕີກະຊວງປ້ອງກັນປະເທດ, ແລະ ຫົວໜ້າເລຂາທິການຄະນະລັດຖະມົນຕີ.

# ສະພາ Portugal ອະນຸມັດກົດໝາຍສັນຊາດ ເຂັ້ມງວດກົດລະບຽບການເປັນພົນລະເມືອງ



(Xinhua) - ວັນພຸດທີ 2 ເມສານີ້, ສະພາແຫ່ງຊາດປອກຕຸຍການອະນຸມັດກົດໝາຍສັນຊາດສະບັບປັບປຸງ ເຊິ່ງເພີ່ມຄວາມເຂັ້ມງວດເງື່ອນໄຂໃນການໄດ້ຮັບ ແລະ ຮັກສາສັນຊາດປອກຕຸຍການ, ຫຼັງຈາກສານລັດຖະທຳມະນູນ ໄດ້ຍົກເລີກກົດໝາຍສະບັບກ່ອນໜ້າ.

ມີການຜ່ານຮ່າງກົດໝາຍສອງສະບັບ ດ້ວຍການສະໜັບສະໜູນຂອງພັກສັງຄົມປະຊາທິປະໄຕ (PSD) ຝ່າຍກາງຂວາ, ພັກ Chega ຝ່າຍຂວາຈັດ, ພັກເສລີນິຍົມ ແລະ ພັກປະຊາຊົນ (CDS) ເຊິ່ງໄດ້ຮັບສຽງສ່ວນຫຼາຍສອງສ່ວນສາມທີ່ກຳນົດ; ພັກຝ່າຍຊ້າຍລວມມີພັກສັງຄົມນິຍົມ, ພັກ Livre, ພັກກອມມູນິດປອກຕຸຍການ, ພັກກຸ່ມຊ້າຍ, ແລະ ພັກ ຄົນ-ສັດ-ທຳມະຊາດ ຫຼື PAN (People-Animals-Nature) ລົງຄະແນນສຽງຄັດຄ້ານທັງສອງມາດຕະການ.

ຮ່າງກົດໝາຍສະບັບທຳອິດ ຫ້າມບຸກຄົນທີ່ຖືກຕັດສິນວ່າມີຄວາມຜິດທາງອາຍາຮ້າຍແຮງ ແລະ ຖືກຕັດສິນຕັດອິດສະລະພາບ 3 ປີຂຶ້ນໄປ ຈາກການໄດ້ຮັບສັນຊາດປອກຕຸຍການ; ຮ່າງກົດໝາຍສະບັບທີສອງ ເຊິ່ງປັບປຸງປະມວນກົດໝາຍອາຍາ ກຳນົດໃຫ້ການຖອນສັນຊາດ ເປັນການລົງໂທດເພີ່ມຕື່ມສຳລັບຜູ້ທີ່ຖືກຕັດສິນຕັດອິດສະລະພາບ 5 ປີຂຶ້ນໄປ ໃນການກະທຳຜິດທີ່ຮ້າຍແຮງຫຼາຍ ລວມມີການຄາດຕະກຳໂດຍເຈດຕະນາ, ການຄ້າທາດ (slavery), ການຄ້າມະນຸດ, ການຂົ່ມຂືນ ແລະ ການລ່ວງລະເມີດທາງເພດເຊັ່ນດຽວກັນກັບການຮ່ວມກັນກໍ່ອາຊະຍາກຳ, ການຄ້າ ຂາຍຢາເສບຕິດ ແລະ ການຄ້າຂາຍອາວຸດ.

ກົດໝາຍສະບັບນີ້ ເປັນຜົນມາຈາກຂໍ້ຕົກລົງໃນສະພາແຫ່ງຊາດ ລະຫວ່າງ PSD ແລະ Chega ຫຼັງຈາກຮ່າງສະບັບເດີມທີ່ໄດ້ຮັບການອະນຸມັດໃນເດືອນຕຸລາປີຜ່ານມາ ຖືກສົ່ງກັບຄືນໄປຍັງສະພາແຫ່ງຊາດໂດຍສານລັດຖະທຳມະນູນເຊິ່ງມີມະຕິເປັນເອກະສັນວ່າ ບົດບັນຍັດຫຼາຍຂໍ້ຂັດຕໍ່ລັດຖະທຳມະນູນ ໂດຍສ່ວນໃຫຍ່ແມ່ນຍ້ອນລະເມີດຫຼັກການຄວາມສະເໝີພາບ; ພາຍໃຕ້ຂໍ້ຕົກລົງນີ້, PSD ແລະ CDS ໄດ້ຍົກເລີກຂໍ້ສະເໜີເດີມທີ່ກຳນົດໂທດຕັດອິດສະລະພາບ 6 ປີ ສຳລັບການຖອນສັນຊາດ ແລະ ຍອມຮັບຂໍ້ສະເໜີຂອງ Chega ທີ່ກຳນົດໂທດຕັດອິດສະລະພາບ 5 ປີ ແລະ ຫຼຸດໂທດຕັດອິດສະລະພາບຂັ້ນຕ່ຳ ທີ່ຂັດຂວາງການໄດ້ສັນຊາດ ຈາກ 4 ເຫຼືອ 3 ປີ.

ຮ່າງກົດໝາຍທີ່ໄດ້ຮັບການອະນຸມັດໃນປັດຈຸບັນ ຈະຖືກສົ່ງໄປຍັງປະທານາທິບໍດີ ອັນໂຕນີໂອ ໂຮເຊ ເຊກູໂຣ (Antonio Jose Seguro) ທີ່ອາດຈະປະກາດໃຊ້, ຄັດຄ້ານ ຫຼືສົ່ງຕໍ່ໃຫ້ສານລັດຖະທຳມະນູນ ເພື່ອກວດຄືນຄວາມຖືກຕ້ອງຕາມລັດຖະທຳມະນູນອີກຄັ້ງ.

# ລັດຖະສະພາ Cameroon ອະນຸມັດກົດໝາຍ ນຳຕຳແໜ່ງຮອງປະທານາທິບໍດີກັບມາໃຊ້ໃໝ່




(Xinhua) - ວັນເສົາທີ 4 ເມສານີ້, ລັດຖະສະພາກາເມີຣູນ ໄດ້ອະນຸມັດຮ່າງກົດໝາຍເພື່ອນຳຕຳແໜ່ງຮອງປະທານາທິບໍດີກັບມາໃຊ້ໃໝ່; ຜົນການລົງຄະແນນສຽງທີ່ເຜີຍແຜ່ໂດຍສະພາແຫ່ງຊາດສະແດງໃຫ້ເຫັນວ່າ ຈາກສະມາຊິກສະພາແຫ່ງຊາດ (ທັງໝົດ 180 ທີ່ນັ່ງ) ແລະ ສະພາສູງ (ທັງໝົດ 100 ທີ່ນັ່ງ) 222 ຄົນ, ມີ 200 ຄົນລົງຄະແນນສຽງເຫັນດີ, 18 ຄົນຄັດຄ້ານ ແລະ 4 ຄົນ ງົດອອກສຽງ.

ຕາມຮ່າງກົດໝາຍທີ່ໄດ້ຮັບການອະນຸມັດ, ຮອງປະທານາທິບໍດີ ຈະຖືກແຕ່ງຕັ້ງໂດຍປະທານາທິບໍດີ ແລະ ຈະເຂົ້າຮັບຕຳແໜ່ງແທນໃນກໍລະນີຕຳແໜ່ງປະທານາທິບໍດີວ່າງ.

ກາເມີຣູນ ຍົກເລີກຕຳແໜ່ງຮອງປະທານາທິບໍດີ ໃນປີ 1984 ລະຫວ່າງການປັບປຸງລັດຖະທຳມະນູນ, ໂດຍແທນທີ່ດ້ວຍຕຳແໜ່ງນາຍົກລັດຖະມົນຕີ.

ສະມາຊິກລັດຖະສະພາກ່າວວ່າ ການນຳຕຳແໜ່ງຮອງປະທານາທິບໍດີກັບມາໃຊ້ໃໝ່ນີ້ ຊີ້ບອກເຖິງການກັບຄືນສູ່ໂຄງສ້າງບໍລິຫານແບບສອງອຳນາດ, ໂດຍມີຈຸດປະສົງເພື່ອແກ້ໄຂບັນຫາການສືບທອດຕຳແໜ່ງໃນລະດັບສູງສຸດຂອງລັດ.

# Poland ຈະປັບປຸງກົດໝາຍ ເພື່ອຄວບຄຸມສັນຍາຈ້າງງານທີ່ບໍ່ຖືກຕ້ອງ



(Xinhua) - ປະທານາທິບໍດີ ຄາໂຣນ ນາວຣັອກກີ (Karol Nawrocki) ແຫ່ງສາທາລະນະລັດໂປແລນ ໄດ້ລົງນາມປັບປຸງກົດໝາຍເມື່ອວັນພະຫັດທີ 2 ເມສາຜ່ານມາ ເຊິ່ງມີເປົ້າໝາຍເພື່ອຄວບຄຸມຄວາມບໍ່ໂປ່ງໃສໃນສັນຍາຈ້າງງານ, ເຖິງແມ່ນວ່າກົດໝາຍສະບັບນີ້ຈະຕ້ອງໄດ້ຮັບການກວດຄືນໂດຍສານລັດຖະທຳມະນູນຫຼັງຈາກການປະກາດໃຊ້ກໍຕາມ.

ການປັບປຸງກົດໝາຍວ່າດ້ວຍສຳນັກງານກວດກາແຮງງານແຫ່ງຊາດນີ້ ໃຫ້ອຳນາດແກ່ຜູ້ກວດກາແຮງງານໃນການຈັດປະເພດສັນຍາທາງແພ່ງ ແລະ ສັນຍາລະຫວ່າງທຸລະກິດ ບາງປະເພດຄືນໃໝ່ ໃຫ້ເປັນສັນຍາຈ້າງງານ ຫາກສັນຍາເຫຼົ່ານັ້ນມີລັກສະນະຂອງຄວາມສຳພັນລະຫວ່າງນາຍຈ້າງກັບລູກຈ້າງ; ຢ່າງໃດກໍຕາມ, ການຕັດສິນໃຈຂັ້ນສຸດທ້າຍ ຍັງຢູ່ພາຍໃຕ້ການກວດຄືນຂອງສານ.

# Guinea ເລື່ອນການເລືອກຕັ້ງ ສະພານິຕິບັນຍັດ ແລະ ເທດສະບານ



(Xinhua) - ກິເນ ໄດ້ເລື່ອນການເລືອກຕັ້ງສະພານິຕິບັນຍັດແລະເທດສະບານອອກໄປໜຶ່ງອາທິດ ເປັນວັນທີ 31 ພຶດສະພາ 2026, ອີງຕາມລັດຖະດຳລັດຂອງປະທານາທິບໍດີທີ່ອອກອາກາດທາງໂທລະພາບແຫ່ງຊາດໃນວັນສຸກທີ 10 ເມສາ.

ການເລືອກຕັ້ງໃນເບື້ອງຕົ້ນແມ່ນກຳນົດໄວ້ໃນວັນທີ24 ພຶດສະພາ, ເຈົ້າໜ້າທີ່ກ່າວວ່າການເລື່ອນອອກໄປ ຈະເຮັດໃຫ້ຕ້ອງປັບຕາຕະລາງການໂຄສະນາຫາສຽງໃຫ້ສອດຄ່ອງກັບປະມວນກົດໝາຍການເລືອກຕັ້ງ.

ການໂຄສະນາຫາສຽງສຳລັບການເລືອກຕັ້ງສະພານິຕິບັນຍັດ ຈະເລີ່ມຕັ້ງແຕ່ວັນທີ 1-28 ພຶດສະພາ, ໃນຂະນະທີ່ການໂຄສະນາຫາສຽງສຳລັບການເລືອກຕັ້ງເທດສະບານ ຈະເລີ່ມຕັ້ງແຕ່ວັນທີ 11-28 ພຶດສະພາ.

# ຮ່າງກົດໝາຍສະຫງວນທີ່ນັ່ງສຳລັບແມ່ຍິງ ບໍ່ຜ່ານການພິຈາລະນາໃນລັດຖະສະພາອິນເດຍ




(Xinhua) - ລັດຖະບານຂອງນາຍົກລັດຖະມົນຕີອິນເດຍ ນາເຣນທຣາ ໂມດີ ເຊິ່ງເປັນລັດຖະບານປະສົມຂອງຫຼາຍພັກການເມືອງ ນຳໂດຍ BJP ທີ່ເປັນພັກລັດຖະບານຕົ້ນຕໍ ພົບວ່າ ຮ່າງກົດໝາຍວ່າດ້ວຍການປັບປຸງລັດຖະທຳມະນູນ (Constitutional Amendment Bill) ບໍ່ສາມາດຜ່ານການພິຈາລະນາໃນໂລກສະພາ (Lok Sabha) ເຊິ່ງເປັນສະພາຕ່ຳຂອງລັດຖະສະພາ ເມື່ອວັນສຸກທີ 17 ເມສາຜ່ານມາ.

ຮ່າງກົດໝາຍວ່າດ້ວຍການປັບປຸງລັດຖະທຳມະນູນຂອງລັດຖະບານກາງ ພະຍາຍາມທີ່ຈະຮັບປະກັນການສະຫງວນທີ່ນັ່ງ 33% ສຳລັບແມ່ຍິງໃນລັດຖະສະພາ ແລະ ສະພານິຕິບັນຍັດຂອງລັດຕ່າງໆ; ນອກຈາກນີ້, ຍັງມີຈຸດປະສົງທີ່ຈະເພີ່ມຈຳນວນສະມາຊິກຂອງ Lok Sabha ສູງສຸດເປັນ 850 ຄົນ ແລະ ກຳນົດເຂດເລືອກຕັ້ງລັດຖະສະພາໂດຍອີງໃສ່ການສຳຫຼວດພົນລະເມືອງທີ່ດຳເນີນໃນປີ 2011.

ເພື່ອໃຫ້ຮ່າງກົດໝາຍນີ້ຜ່ານການພິຈາລະນາ, ລັດຖະບານກາງຕ້ອງການສຽງສ່ວນຫຼາຍສອງສ່ວນສາມ ຄື 362 ສຽງ ຈາກສະມາຊິກທັງໝົດ 543 ຄົນ ໃນ Lok Sabha; ຢ່າງໃດກໍຕາມ, ມີພຽງສະມາຊິກ 298 ຄົນເທົ່ານັ້ນ ທີ່ລົງຄະແນນສຽງເຫັນດີ, ຂະນະທີ່ 230 ຄົນ ລົງຄະແນນສຽງຄັດຄ້ານ.

ປັດຈຸບັນ, ຜູ້ແທນເພດຍິງໃນສະພາຕ່ຳອິນເດຍ ມີພຽງ 14%.

# ລັດຖະບານກຳປູເຈຍ ອະນຸມັດຮ່າງກົດໝາຍເກນທະຫານ



(Xinhua) - ວັນທີ 23 ເມສາຜ່ານມາ, ລັດຖະບານກຳປູເຈຍ ໄດ້ອະນຸມັດຮ່າງກົດໝາຍວ່າດ້ວຍເກນທະຫານສະບັບໃໝ່ ເຊິ່ງກຳນົດໃຫ້ຊາຍໜຸ່ມໄວຜູ້ໃຫຍ່ ຕ້ອງປະຕິບັດພັນທະທາງທະຫານ; ການອະນຸມັດດັ່ງກ່າວ ມີຂຶ້ນລະຫວ່າງກອງປະຊຸມຄະນະລັດຖະມົນຕີປະຈຳອາທິດທີ່ມີນາຍົກລັດຖະມົນຕີ ຮຸນ ມາເນັດ ເປັນປະທານ, ຕາມຖະແຫຼງການຂອງລັດຖະບານທີ່ອອກຫຼັງຈາກກອງປະຊຸມ.

ຖະແຫຼງການກ່າວວ່າ ຮ່າງກົດໝາຍສະບັບນີ້ ມີຈຸດປະສົງເພື່ອເສີມສ້າງຄວາມສາມາດຂອງກອງທັບ. "ພາຍໃຕ້ຮ່າງກົດໝາຍ, ພົນລະເມືອງກຳປູເຈຍທຸກຄົນທີ່ມີອາຍຸລະຫວ່າງ 18-25 ປີ ຕ້ອງປະຕິບັດພັນທະທາງທະຫານ; ຢ່າງໃດກໍຕາມ, ສຳລັບແມ່ຍິງ ຈະຖືກຈັດຕັ້ງປະຕິບັດພາຍໃຕ້ "ຫຼັກການສະໝັກໃຈ".

ຮ່າງກົດໝາຍສະບັບນີ້ ຕ້ອງໄດ້ຮັບການຮັບຮອງຈາກສະພາແຫ່ງຊາດ ແລະ ຜ່ານການທົບທວນຄືນຂັ້ນສຸດທ້າຍ ໂດຍສະພາສູງ ກ່ອນທີ່ຈະສົ່ງໄປຫາກະສັດ ໂນໂຣດົມ ສີຫາໂມນີ ເພື່ອປະກາດໃຊ້.

ອີງຕາມຂ່າວປະຊາສຳພັນ, ປະເທດໃນອາຊີຕາເວັນອອກສຽງໃຕ້ແຫ່ງນີ້ ເຄີຍມີກົດໝາຍວ່າດ້ວຍການເກນທະຫານພາກບັງຄັບ ເມື່ອປີ 2006, ແຕ່ມັນຍັງບໍ່ກວມເອົາທຸກດ້ານໃນປັດຈຸບັນ ແລະ ອະນາຄົດ; ດັ່ງນັ້ນ, ລັດຖະບານຈຶ່ງຕັດສິນໃຈສ້າງກົດໝາຍສະບັບນີ້ອີກຄັ້ງ.

# ນາຍົກເກຣັກ ສະເໜີຫ້າມລັດຖະມົນຕີ ດຳລົງຕຳແໜ່ງໃນລັດຖະສະພາພ້ອມກັນ



(Xinhua) - ວັນຈັນທີ 6 ເມສານີ້, ຄີເຣຍກອສ ມິດໂຊຕາກິສ (Kyriakos Mitsotakis) ນາຍົກລັດຖະມົນຕີເກຣັກ ສະເໜີການປະຕິຮູບສະຖາບັນ ໂດຍຫ້າມລັດຖະມົນຕີໃນລັດຖະບານ ດຳລົງຕຳແໜ່ງສະມາຊິກລັດຖະສະພາພ້ອມກັນ ເຊິ່ງເປັນການເຄື່ອນໄຫວທີ່ມີຈຸດປະສົງເພື່ອເພີ່ມຄວາມໂປ່ງໃສ ແລະ ປັບປຸງການບໍລິຫານລັດໃຫ້ທັນສະໄໝ.

ພາຍໃຕ້ຂໍ້ສະເໜີນີ້ ເຊິ່ງຈະມີຜົນບັງຄັບໃຊ້ຫຼັງຈາກການເລືອກຕັ້ງທົ່ວໄປປີ 2027, ສະມາຊິກລັດຖະສະພາທີ່ໄດ້ຮັບການແຕ່ງຕັ້ງເຂົ້າສູ່ຄະນະລັດຖະມົນຕີ ຈະຕ້ອງສະຫຼະຕຳແໜ່ງໃນລັດຖະສະພາເປັນການຊົ່ວຄາວ; ຕຳແໜ່ງທີ່ວ່າງ ຈະຖືກຕື່ມໂດຍຜູ້ສະໝັກທີ່ມີຄຸນສົມບັດເໝາະສົມລຳດັບຖັດໄປໃນບັນຊີລາຍຊື່ຜູ້ສະໝັກຂອງພັກ ຕະຫຼອດໄລຍະເວລາດຳລົງຕຳແໜ່ງຂອງລັດຖະມົນຕີ.

# ອັງກິດ ອະນຸມັດຮ່າງກົດໝາຍຫ້າມຂາຍຢາສູບໃຫ້ກັບຜູ້ທີ່ອາຍຸຕ່ຳກວ່າ 18 ປີ




(AFP) - ວັນທີ 21 ເມສາຜ່ານມາ, ສະພາຕ່ຳ ແລະ ສະພາສູງຂອງອັງກິດ ລົງມະຕິອະນຸມັດຮ່າງກົດໝາຍທີ່ຈະຫ້າມເດັກຕ່ຳກວ່າ 18 ປີ ຊື້ຢາສູບຕະຫຼອດຊີວິດ; ຮ່າງກົດໝາຍຢາສູບ ແລະ ຢາສູບໄຟຟ້າ ມີຈຸດປະສົງເພື່ອປ້ອງກັນບໍ່ໃຫ້ຜູ້ທີ່ເກີດຫຼັງຈາກວັນທີ 1 ມັງກອນ 2009 ເຊິ່ງປັດຈຸບັນມີອາຍຸ 17 ປີ ເລີ່ມສູບຢາ.

ເວສ ສະຕຣິດຕິງ (Wes Streeting) ລັດຖະມົນຕີກະຊວງສາທາລະນະສຸກ ກ່າວວ່າ: ນີ້ແມ່ນ "ຊ່ວງເວລາປະຫວັດສາດສຳລັບສາທາລະນະສຸກຂອງປະເທດ" ເຊິ່ງຈະນຳໄປສູ່ "ຄົນຮຸ່ນທຳອິດທີ່ບໍ່ສູບຢາ, ທີ່ໄດ້ຮັບການປົກປ້ອງຈາກການເສບຕິດ ແລະ ອັນຕະລາຍຕະຫຼອດຊີວິດ".

ເມື່ອກົດໝາຍສະບັບນີ້ມີຜົນບັງຄັບໃຊ້, ລັດຖະບານຈະມີອຳນາດໃນການຂະຫຍາຍການຫ້າມສູບຢາພາຍໃນອາຄານໄປສູ່ພື້ນທີ່ກາງແຈ້ງ ເຊັ່ນສະໜາມເດັກຫຼິ້ນ ລວມທັງພື້ນທີ່ນອກໂຮງຮຽນ ແລະ ໂຮງໝໍ, ເຊັ່ນດຽວກັນກັບການຈຳກັດລົດຊາດ ແລະ ການຫຸ້ມຫໍ່ຂອງຢາສູບໄຟຟ້າ ແລະ ຫ້າມການສູບຢາສູບໄຟຟ້າໃນສະຖານທີ່ທີ່ຫ້າມສູບຢາຢູ່ແລ້ວ.

ຮ່າງກົດໝາຍດັ່ງກ່າວ ແມ່ນສ່ວນໜຶ່ງຂອງຄວາມພະຍາຍາມທີ່ຈະຍົກລະດັບມາດຕະການປ້ອງກັນສຸຂະພາບ ແລະ ຫຼຸດຜ່ອນຄວາມກົດດັນໃນໄລຍະຍາວຕໍ່ໜ່ວຍງານບໍລິການສຸຂະພາບແຫ່ງຊາດ ເຊິ່ງໄດ້ຮັບທຶນຈາກລັດຖະບານ.

ໃນເດືອນມິຖຸນາປີຜ່ານມາ, ລັດຖະບານພັກແຮງງານ ໄດ້ອອກກົດໝາຍຫ້າມຈຳໜ່າຍຢາສູບໄຟຟ້າທີ່ໃຊ້ແລ້ວຖິ້ມ ເຊິ່ງມີລາຄາຖືກ ແລະ ມີການຫຸ້ມຫໍ່ທີ່ມີສີສັນສົດໃສ, ເຮັດໃຫ້ພວກມັນເປັນທີ່ນິຍົມໃນບັນດາໄວໜຸ່ມ.

ເຫົ່າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ຫູເບົາເຊື່ອງ່າຍ ອັນຕະລາຍສຸດໆ



ພາຍໃຕ້ຫົວບົດທີ່ອ່າວຜິລຶກກຶກກືນີ້, ຜູ້ຂຽນມີເລື່ອງທີ່ເປັນກະແສໃນຊຸມປີຫຼັງໆນີ້ ມາເລົ່າສູ່ຟັງ, ບໍ່ຕ້ອງເດົາກໍພໍຮູ້ວ່າເປັນເລື່ອງແກ້ງຕົ້ມຕຸ໋ນທາງອອນລາຍ; ຈຸດປະສົງຂອງເລື່ອງກໍຄື ເພື່ອເຕືອນກັນໃຫ້ມີສະຕິ, ຮູ້ອຸບາຍລາຍຫຼ່ຽມວ່າການສໍ້ໂກງປະເພດນີ້ ມັນມີໜ້າຕາແນວໃດ.

ສຳລັບເລື່ອງແກ້ງຕົ້ມຕຸ໋ນທາງອອນລາຍນັ້ນ ວ່າກັນວ່າ ບຸກຄົນທີ່ເປັນເຫຍື່ອສຳຄັນຂອງອາຊະຍາກຳປະເພດນີ້ ລ້ວນແຕ່ແມ່ນພວກຫູເບົາເຊື່ອງ່າຍ ຫຼາຍກວ່າໝູ່ ແມ່ນຜູ້ເຖົ້າໄວບຳນານ, ເຫດຜົນທີ່ຄົນໃນກຸ່ມອາຍຸນີ້ ກາຍເປັນເປົ້າຖືກຕົ້ມຕຸ໋ນຫຼາຍນັ້ນ ມີຢູ່ສອງປັດໄຈຄື: ເປັນຄົນທີ່ພໍມີເງິນທີ່ໄດ້ສະສົມມາຈາກເງິນຊີວິດການເຮັດວຽກ ແລະ ອັນທີສອງ ແມ່ນຍ້ອນຄົນໄວນີ້ ຍັງນຳຍຸກເຕັກໂນໂລຊີຂໍ້ມູນຂ່າວສານບໍ່ທັນ ແລະ ທີ່ປະຕິເສດບໍ່ໄດ້ ກໍຄືຍ້ອນອຸບາຍຫຼ່ຽມລາຍທີ່ສະຫຼັບຊັບຊ້ອນຂອງກຸ່ມອາຊະຍາກອນປະເພດນີ້ ເພາະວ່າຮູບແບບທີ່ພວກເຂົາເຈາະເຂົ້າເຖິງເຫຍື່ອນັ້ນ ມີສາລະພັດສາລະເພວິທີ ເຊິ່ງພໍສະຫຼຸບໄດ້ດັ່ງນີ້: ອັນທີ 1. ດ້ວຍຮູບການກະຕຸ້ນຄວາມ “ຢາກ” ຫຼື ຕັນຫາຂອງເຫຍື່ອ ເຊັ່ນ ຊັກຊວນໃຫ້ລົງທຶນຮ່ວມເພື່ອ “ລວຍທາງລັດ”, ເພື່ອເປັນເສດຖີໃນຊົ່ວພິບຕາດຽວ; ອັນທີ 2 ແມ່ນຊັກຊວນໃຫ້ໄປອອກແຮງງານທີ່ມີລາຍຮັບສູງ; ອັນທີ 3 ແມ່ນຫຼອກໃຫ້ເຮັດການຊື້-ຂາຍທາງອອນລາຍ, ຫຼອກໃຫ້ເຊົ່າເຮືອນ, ຕຶກສຳນັກງານ ແລະ ອື່ນໆ. ວິທີທີ່ກຸ່ມແກ້ງເຂົ້າຫາເຫຍື່ອນັ້ນ ກໍແນບນຽນພໍແລ້ວ ຄືສ້າງຄວາມລົ້ງເຄີຍຕີສະໜິດ; ປອມຕົວເປັນເຈົ້າໜ້າທີ່ຕຳຫຼວດ, ເຈົ້າໜ້າທີ່ພາສີ, ພະນັກງານທະນາຄານ ຕະຫຼອດຮອດການນຳໃຊ້ຄວາມຫຼໍ່ຄວາມສວຍ ເພື່ອສານຕຳນານຮັກກັບເຫຍື່ອ ໃນບາງກໍລະນີກໍເຖິງຂັ້ນໄດ້ແຕ່ງດອງຄອງຮັກເພື່ອເປັນສາກບັງໜ້າ.

ຕາມບົດຮຽນຂອງສິງກະໂປ ກຸ່ມແກ້ງຕົ້ມຕຸ໋ນທີ່ອັນຕະລາຍ ແລະ ໜ້າຢ້ານກວາທີ່ສຸດ ກໍຄືຈຳພວກທີ່ແອບອ້າງວ່າຕົນເປັນເຈົ້າໜ້າທີ່ທະນາຄານ ເພາະສາມາດຕົວະໃຫ້ຄົນຫຼົງເຊື່ອກວ່າ. ກຸ່ມແກ້ງປະເພດນີ້ ມັກຈະໂທໄປຫາບຸກຄົນທີ່ເປັນເປົ້າໝາຍ ໃຫ້ຢັ້ງຢືນຕົວຕົນໂດຍເອົາຊື່ເຂົ້າລະບົບບໍລິການທາງເອເລັກໂຕຣນິກ ເຊິ່ງເປັນການລົງທະບຽນສາທາລະນະທີ່ຖືກຕ້ອງຕາມກົດໝາຍ ຈາກນັ້ນ, ພວກສໍ້ໂກງກໍຈະອ້າງວ່າບັນຊີທະນາຄານຂອງເຫຍື່ອຖືກໃຊ້ເພື່ອຟອກເງິນ ຫຼື ບໍ່ກໍບອກວ່າຂໍ້ມູນຂອງເຫຍື່ອຖືກລະເມີດ, ການທີ່ອ້າງແບບນີ້ ກໍເພື່ອໃຫ້ເຫຍື່ອເປີດເຜີຍລາຍລະອຽດສ່ວນຕົວຈົນໝົດເປືອກ, ດ້ວຍວິທີນີ້ ເຫຍື່ອກໍຈະຖືກຕົ້ມຈົນເປື່ອຍ! ຂ່າວບອກວ່າການຕົ້ມຕຸ໋ນດ້ວຍວິທີນີ້ ໄດ້ກັດແຫ້ນຈຳນວນເງິນຂອງເຫຍື່ອໄປເປັນຈຳນວນ 614,000 ໂດລາສິງກະໂປ (ເທົ່າກັບ 460,000 ໂດລາສະຫະລັດ) ນັບແຕ່ເດືອນມີນາຫາຕົ້ນເດືອນເມສາ 2025. ແກ້ງຫຼອກລວງທີ່ອ້າງຕົນວ່າເປັນພະນັກງານທະນາຄານນັ້ນລ້ວນແຕ່ມີຄວາມຊຳນານເລື່ອງກ່ຽວກັບລະບົບທະນາຄານ ເຊັ່ນ: ລະບົບການຝາກ-ຖອນ, ການກູ້ຢືມ ກໍຄືດອກເບ້ຍ; ທະນາຄານທີ່ເຂົາອ້າງວ່າພວກຕົນສັງກັດນັ້ນ ມັກຈະເປັນທະນາຄານກາງ (ທະນາຄານແຫ່ງຊາດ) ກໍຄືທະນາຄານທີ່ມີຊື່ສຽງທັງນັ້ນ.






#ບ່າວກະບື

**ອ້າຍ**ບ່າວໄປພົບພໍ່ຜູ້ສາວ ເພື່ອສະເໜີຂໍແຕ່ງດອງກັບລູກສາວຂອງເພິ່ນ.

**ພໍ່ຜູ້ສາວ:** “ຂ້ອຍບໍ່ຢາກໃຫ້ລູກສາວຂ້ອຍໃຊ້ຊີວິດຕະຫຼອດຊາດຢູ່ກັບຄົນຈ້າໆ ບ້າໆບອງໆ”.

**ຜູ້ບ່າວ:** “ລູກກໍ່ຄືກັນ, ບໍ່ຕ້ອງການໃຫ້ແຟນຂອງລູກຢູ່ກັບຄົນໂງ່ໆບ້າໆ; ສະນັ້ນ, ລູກຈຶ່ງມາຂໍແຕ່ງດອງກັບລາວ”.

*#BAOKBU*

A boy goes to meet the father of his girl-friend to ask for het hand in marriage.

**Girl's FATHER:** “I don't want my dear daughter to spend the rest of her life with a fool!”

**BOY:** “Yes sir, I too don't want her to. That is the reason why I have come to ask for her hand in marriage”

## ຜົນສຳເລັດ...

(ຕໍ່ຈາກໜ້າ 5)

ສາມູນເຊື້ອຄວາມເປັນເອກະພາບພາຍໃນ, ປະສານສົມທົບກັນເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານ ມີຄວາມວ່ອງໄວ, ຮັບປະກັນຄວາມຍຸຕິທຳ ເພື່ອໃຫ້ສັງຄົມ ມີຄວາມເຊື່ອໝັ້ນ, ເອົາໃຈໃສ່ຍົກສູງບົດບາດຄວາມຮູ້ຄວາມສາມາດ, ສ້າງ ແລະ ສຶກສາອົບຮົມໃຫ້ຜູ້ພິພາກສາມີຈັນຍາບັນ ແລະ ຈັນຍາທຳ, ໃຫ້ເອົາໃຈໃສ່ຄົ້ນຄວ້າຄະດີໃຫ້ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ເພື່ອເຮັດໃຫ້ການພິຈາລະນາຄະດີ ຖືກຕ້ອງຕາມກົດໝາຍ, ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ສາມາດຈັດຕັ້ງປະຕິບັດໄດ້;

4. ວຽກງານສະພາປະຊາຊົນແຂວງ:

ໄດ້ພິຈາລະນາ ແລະ ຮັບຮອງເອົາ ແຜນການເຄື່ອນໄຫວວຽກງານ05ປີ(2026-2030) ຂອງສະພາປະຊາຊົນແຂວງ ໃນນາມການເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ປະຕິບັດພາລະບົດບາດ ພິຈາລະນາ, ຮັບຮອງເອົາ ການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ, ການຕົກລົງບັນຫາສຳຄັນພື້ນຖານຂອງແຂວງ ແລະ ການຕິດຕາມກວດກາ ການເຄົາລົບ, ປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິ ຕົກລົງຂອງກອງປະຊຸມສະພາປະຊາຊົນແຂວງ, ມະຕິ ແລະ ຂໍ້ຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງ.

ໃນວາລະການດຳເນີນກອງປະຊຸມຍັງໄດ້ຮັບໂທລະສັບສາຍດ່ວນ ຈຳນວນ 03 ສາຍ, ມີ 03 ຄຳສະເໜີ. ໃນນັ້ນ, ເປັນຄຳສະເໜີທີ່ກ່ຽວຂ້ອງກັບວຽກງານອຸດສາຫະກຳແລະການຄ້າ; ວຽກງານໂຍທາທິການ ແລະ ຂົນສົ່ງ ເປັນຕົ້ນແມ່ນ: ການຂຸດຄົ້ນແຮ່ຊາຍ ຢູ່ເຂດບ້ານຊຽງແກ້ວ, ນະຄອນ-ຫຼວງພະບາງ, ການລັກລອບຂຸດຄົ້ນແຮ່ຄຳຕົກຂ້ອນ ຢູ່ລ້ອງນໍ້າເຊືອງ, ເມືອງປາກແຊງ ທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ, ກະທົບຕໍ່ຊີວິການເປັນຢູ່ຂອງປະຊາຊົນ ແລະ ພື້ນຖານໂຄງລ່າງ; ບັນຫານໍ້າມັນທີ່ຂາດເຂີນ, ບໍ່ພຽງພໍຕໍ່ຄວາມຕ້ອງການ ແລະ ມີບາງກຸ່ມຄົນທີ່ສວາຍໂອກາດກັກຕຸນນໍ້າມັນ ຕໍ່ກັບຄຳສະເໜີດັ່ງກ່າວ ຄະນະປະຈຳສະພາປະຊາຊົນແຂວງຈະໄດ້ປະສານສົມທົບກັບຄະນະກຳມະການປົກຄອງແຂວງໃນການຄົ້ນຄວ້າ, ແກ້ໄຂໃຫ້ຖືກຕ້ອງຕາມລະບຽບກົດໝາຍ ທັງສອດຄ່ອງກັບສະພາບຄວາມເປັນຈິງ ແລ້ວແຈ້ງຕອບກັບໃຫ້ເຈົ້າຂອງຄຳສະເໜີ ຊາບໃນເວລາທີ່ສົມຄວນ.

**(ວິລິຍະ ວັນນະສີ)**

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພິດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ